ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ
ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

ປະທານປະເທດ

ເລກທີ 328 /ປປທ

ນະຄອນຫຼວງວຽງຈັນ, ວັນທີ 26 ທັນວາ 2017

# ລັດຖະດຳລັດ
# ຂອງປະທານປະເທດ
## ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ

**ກ່ຽວກັບການປະກາດໃຊ້ກົດໝາຍ ວ່າດ້ວຍການກວດກາລັດ (ສະບັບປັບປຸງ)**

- ອີງຕາມ ລັດຖະທຳມະນູນ ແຫ່ງ ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ (ສະບັບປັບປຸງ ປີ 2015) ໝວດທີ VI ມາດຕາ 67 ຂໍ້ 1;
- ອີງຕາມ ມະຕິຂອງກອງປະຊຸມສະພາແຫ່ງຊາດ ສະບັບເລກທີ 073/ສພຊ, ລົງວັນທີ 16 ພະຈິກ 2017 ກ່ຽວກັບການຮັບຮອງເອົາກົດໝາຍ ວ່າດ້ວຍການກວດກາລັດ (ສະບັບປັບປຸງ);
- ອີງຕາມ ໜັງສືສະເໜີຂອງຄະນະປະຈຳສະພາແຫ່ງຊາດ ສະບັບເລກທີ 037/ຄປຈ, ລົງວັນທີ 13 ທັນວາ 2017.

**ປະທານປະເທດ**

**ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ ອອກລັດຖະດຳລັດ:**

ມາດຕາ 1 ປະກາດໃຊ້ກົດໝາຍ ວ່າດ້ວຍການກວດກາລັດ (ສະບັບປັບປຸງ).

ມາດຕາ 2 ລັດຖະດຳລັດສະບັບນີ້ ມີຜົນສັກສິດ ນັບແຕ່ວັນລົງລາຍເຊັນ ເປັນຕົ້ນໄປ.

**ປະທານປະເທດ ແຫ່ງ ສປປ ລາວ**

ປະທານປະເທດ

ບຸນຍັງ ວໍລະຈິດ

ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ

ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

ສະພາແຫ່ງຊາດ

ເລກທີ 073 /ສພຊ

ນະຄອນຫຼວງວຽງຈັນ, ວັນທີ 16/11/17

# ມະຕິ

## ຂອງກອງປະຊຸມສະພາແຫ່ງຊາດ

## ກ່ຽວກັບການຮັບຮອງເອົາກົດໝາຍວ່າດ້ວຍການກວດກາລັດ (ສະບັບປັບປຸງ)

---

ອີງຕາມລັດຖະທຳມະນູນ ແຫ່ງ ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ (ສະບັບປັບປຸງ ປີ 2015) ມາດຕາ 53 ຂໍ້ 1 ແລະ ກົດໝາຍວ່າດ້ວຍສະພາແຫ່ງຊາດ (ສະບັບປັບປຸງ ປີ 2015) ມາດຕາ 11 ຂໍ້ 1.

ພາຍຫຼັງທີ່ກອງປະຊຸມສະໄໝສາມັນ ເທື່ອທີ 4 ຂອງສະພາແຫ່ງຊາດ ຊຸດທີ VIII ໄດ້ຄົ້ນຄວ້າພິຈາລະນາ ຢ່າງກວ້າງຂວາງ ແລະ ເລິກເຊິ່ງ ກ່ຽວກັບເນື້ອໃນຂອງກົດໝາຍວ່າດ້ວຍການກວດກາລັດ (ສະບັບປັບປຸງ) ໃນວາລະກອງປະຊຸມຕອນບ່າຍຂອງ ວັນທີ 16 ພະຈິກ 2017.

**ກອງປະຊຸມສະພາແຫ່ງຊາດ ຕົກລົງ:**

ມາດຕາ 1 ຮັບຮອງເອົາກົດໝາຍວ່າດ້ວຍການກວດກາລັດ (ສະບັບປັບປຸງ) ດ້ວຍຄະແນນສຽງເຫັນດີເປັນສ່ວນຫຼາຍ.

ມາດຕາ 2 ມະຕິສະບັບນີ້ ມີຜົນສັກສິດນັບແຕ່ວັນລົງລາຍເຊັນ ເປັນຕົ້ນໄປ.

ປະທານສະພາແຫ່ງຊາດ

ປານີ ຢາທໍ່ຕູ້

ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ
ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

ສະພາແຫ່ງຊາດ

ເລກທີ 41 /ສພຊ
ນະຄອນຫຼວງວຽງຈັນ, ວັນທີ 16 ພະຈິກ 2017

# ກົດໝາຍ
# ວ່າດ້ວຍການກວດກາລັດ
# (ສະບັບປັບປຸງ)

## ພາກທີ I
## ບົດບັນຍັດທົ່ວໄປ

**ມາດຕາ 1 (ປັບປຸງ) ຈຸດປະສົງ**

ກົດໝາຍສະບັບນີ້ ກໍານົດ ຫຼັກການ, ລະບຽບການ ແລະ ມາດຕະການ ກ່ຽວກັບການກວດກາລັດ ເພື່ອເຮັດໃຫ້ວຽກງານດັ່ງກ່າວ ມີຄວາມເຂັ້ມແຂງ, ສາມາດດໍາເນີນໄດ້ຢ່າງມີປະສິດທິພາບ, ຊອກໃຫ້ເຫັນດ້ານດີ, ດ້ານຕັ້ງໜ້າ, ດ້ານອ່ອນ, ດ້ານຫຍໍ້ທໍ້, ການລະເມີດກົດໝາຍຂອງບຸກຄົນ, ນິຕິບຸກຄົນ ຫຼື ການຈັດຕັ້ງ ແລະ ມີມາດຕະການສະກັດກັ້ນ, ຕ້ານ ແລະ ແກ້ໄຂ ແນໃສ່ເຮັດໃຫ້ອໍານາດລັດເຂັ້ມແຂງ, ເພີ່ມທະວີຄວາມສັກສິດຂອງການຄຸ້ມຄອງລັດ, ຄຸ້ມຄອງເສດຖະກິດ-ສັງຄົມ ດ້ວຍກົດໝາຍ, ປົກປ້ອງຜົນປະໂຫຍດຂອງລັດ, ລວມໝູ່ ລວມທັງສິດ ແລະ ຜົນປະໂຫຍດອັນຊອບທໍາຂອງພົນລະເມືອງ ປະກອບສ່ວນເຂົ້າໃນການປົກປັກຮັກສາ ແລະ ສ້າງສາພັດທະນາປະເທດຊາດ.

**ມາດຕາ 2 (ປັບປຸງ) ການກວດກາລັດ**

ການກວດກາລັດ ແມ່ນ ການເຄື່ອນໄຫວ ຕິດຕາມ, ກວດກາ, ເກັບກໍາຂໍ້ມູນ ແລະ ຫຼັກຖານ ກ່ຽວກັບການຈັດຕັ້ງປະຕິບັດນະໂຍບາຍ, ກົດໝາຍ, ລະບຽບການ, ໜ້າທີ່ ຄວາມຮັບຜິດຊອບຂອງການຈັດຕັ້ງ ແລະ ບຸກຄົນ ຢູ່ໃນອົງການອໍານາດລັດ ເພື່ອພິຈາລະນາ, ຕີລາຄາ, ປະເມີນຜົນການຈັດຕັ້ງປະຕິບັດວຽກງານດັ່ງກ່າວ ພ້ອມທັງສະເໜີວິທີການ ແລະ ມາດຕະການ ໃຫ້ອົງການທີ່ກ່ຽວຂ້ອງ ຂອງເປົ້າໝາຍຖືກກວດກາ ແກ້ໄຂຜົນຂອງການກວດກາຕາມກົດໝາຍ.

**ມາດຕາ 3 (ປັບປຸງ) ການອະທິບາຍຄໍາສັບ**

ຄໍາສັບທີ່ນໍາໃຊ້ໃນກົດໝາຍສະບັບນີ້ ມີຄວາມໝາຍ ດັ່ງນີ້:

1. **ການຈັດຕັ້ງ** ໝາຍເຖິງ ທຸກການຈັດຕັ້ງລັດ ແລະ ອົງການຈັດຕັ້ງອື່ນ ທີ່ນໍາໃຊ້ງົບປະມານຂອງລັດ;

2. **ການຕິດຕາມ** ໝາຍເຖິງ ການເກັບກຳສະພາບ, ຊອກຮູ້, ສັງເກດ, ຕີລາຄາການເຄື່ອນໄຫວຂອງການຈັດຕັ້ງ ແລະ ພະນັກງານ-ລັດຖະກອນ ໃນການຈັດຕັ້ງປະຕິບັດ ນະໂຍບາຍ, ກົດໝາຍ ແລະ ລະບຽບການ, ພາລະບົດບາດ, ສິດ ແລະ ໜ້າທີ່;

3. **ອົງການອຳນາດລັດ** ໝາຍເຖິງ ອົງການນິຕິບັນຍັດ, ອົງການບໍລິຫານລັດ ແລະ ອົງການຕຸລາການ;

4. **ການກວດກາອົງການບໍລິຫານລັດ** ໝາຍເຖິງ ການກວດກາການຈັດຕັ້ງປະຕິບັດນະໂຍບາຍ, ກົດໝາຍ, ລະບຽບການ, ພາລະບົດບາດ, ສິດ ແລະ ໜ້າທີ່ ຂອງກະຊວງ, ອົງການ, ອົງການລັດທຽບເທົ່າກະຊວງ, ອົງການປົກຄອງແຂວງ, ນະຄອນຫຼວງ, ເມືອງ, ເທດສະບານ, ນະຄອນ, ບ້ານ ແລະ ອົງການຈັດຕັ້ງອື່ນຂອງລັດທີ່ກ່ຽວຂ້ອງ ລວມທັງບຸກຄົນ ທີ່ຂຶ້ນກັບການຄຸ້ມຄອງໂດຍກົງຂອງອົງການດັ່ງກ່າວ;

5. **ການກວດກາລັດ ຕາມຂັ້ນບໍລິຫານການປົກຄອງ** ໝາຍເຖິງ ການກວດກາຂອງອົງການກວດກາລັດ ກ່ຽວກັບການຈັດຕັ້ງປະຕິບັດນະໂຍບາຍ, ກົດໝາຍ, ລະບຽບການ, ພາລະບົດບາດ, ສິດ ແລະ ໜ້າທີ່ຂອງບຸກຄົນ, ການຈັດຕັ້ງ ທີ່ຂຶ້ນກັບການຄຸ້ມຄອງຕາມຂັ້ນບໍລິຫານການປົກຄອງ;

6. **ການກວດກາລັດຕາມຂະແໜງການ** ໝາຍເຖິງ ການກວດກາ ຂອງອົງການກວດກາລັດ ກ່ຽວກັບການຈັດຕັ້ງປະຕິບັດນະໂຍບາຍ, ກົດໝາຍ, ລະບຽບການ, ບັນດາຂໍ້ກຳນົດ ທາງດ້ານວິຊາສະເພາະ, ເຕັກນິກຂອງບຸກຄົນ, ນິຕິບຸກຄົນ ຫຼື ການຈັດຕັ້ງ ທີ່ຂຶ້ນກັບການຄຸ້ມຄອງຂອງຂະແໜງການນັ້ນ;

7. **ຄະນະກວດກາ** ໝາຍເຖິງ ໜ່ວຍງານທີ່ໄດ້ຮັບການແຕ່ງຕັ້ງໃຫ້ດຳເນີນການກວດກາ ໃນແຕ່ລະຄັ້ງ;

8. **ພະນັກງານ-ລັດຖະກອນກວດກາລັດ** ໝາຍເຖິງ ບຸກຄົນ ທີ່ບັນຈຸເຂົ້າໃນອົງການກວດກາລັດຕາມຂັ້ນບໍລິຫານການປົກຄອງ ແລະ ຕາມຂະແໜງການ ຊຶ່ງໄດ້ຮັບການແຕ່ງຕັ້ງ ໃຫ້ເຮັດໜ້າທີ່ກວດກາລັດ ຢູ່ສູນກາງ ແລະ ທ້ອງຖິ່ນ;

9. **ພະແນກຂັ້ນແຂວງ** ໝາຍເຖິງ ພະແນກການ, ອົງການລັດທຽບເທົ່າພະແນກຂັ້ນແຂວງ ທີ່ຂຶ້ນກັບອົງການປົກຄອງຂັ້ນແຂວງ;

10. **ຂັ້ນກະຊວງ** ໝາຍເຖິງ ກະຊວງ, ອົງການ, ອົງການລັດທຽບເທົ່າກະຊວງ;

11. **ຜູ້ໄດ້ຮັບມອບສິດ** ໝາຍເຖິງ ບຸກຄົນ ຫຼື ນິຕິບຸກຄົນ ທີ່ໄດ້ຖືກມອບໝາຍເຮັດໜ້າທີ່ທາງການໃດໜຶ່ງ ຫຼື ໄດ້ເຊັນສັນຍາ ທີ່ຕິດພັນກັບງົບປະມານ ແລະ ຊັບສິນຂອງລັດ.

**ມາດຕາ 4 (ປັບປຸງ) ນະໂຍບາຍຂອງລັດ ກ່ຽວກັບວຽກງານກວດກາລັດ**

ລັດ ສ້າງເງື່ອນໄຂອຳນວຍຄວາມສະດວກໃຫ້ແກ່ວຽກງານກວດກາລັດ ດ້ວຍການວາງນະໂຍບາຍ, ກົດໝາຍ ແລະ ລະບຽບການ, ລົງທຶນພັດທະນາບຸກຄະລາກອນ, ເຕັກນິກ, ເຕັກໂນໂລຊີ, ຂໍ້ມູນ ຂ່າວສານ, ອາຄານສະຖານທີ່ເຮັດວຽກ, ພາຫະນະ, ອຸປະກອນ ແລະ ງົບປະມານ ເພື່ອຮັບປະກັນໃຫ້ແກ່ການຈັດຕັ້ງປະຕິບັດວຽກງານກວດກາລັດໃຫ້ເຂັ້ມງວດ, ມີປະສິດທິພາບ ແນໃສ່ເຮັດໃຫ້ການຄຸ້ມຄອງລັດ, ຄຸ້ມຄອງເສດຖະກິດ-ສັງຄົມ ມີຄວາມໂປ່ງໃສ, ເຂັ້ມແຂງ, ໜັກແໜ້ນ, ຍຸຕິທຳ ແລະ ຖືກຕ້ອງຕາມກົດໝາຍ.

ລັດ ຊຸກຍູ້, ສົ່ງເສີມ ແນວລາວສ້າງຊາດ, ອົງການຈັດຕັ້ງມະຫາຊົນ, ອົງການຈັດຕັ້ງສັງຄົມ, ສື່ມວນຊົນ ແລະ ພົນລະເມືອງ ເຂົ້າຮ່ວມໃນວຽກງານກວດກາ, ສະກັດກັ້ນ ແລະ ຕ້ານການສໍ້ລາດບັງຫຼວງ.

**ມາດຕາ 5 (ປັບປຸງ) ຫຼັກການ ຂອງການກວດກາລັດ**

ການກວດກາລັດ ຕ້ອງປະຕິບັດຕາມຫຼັກການ ດັ່ງນີ້:

1. ປະຕິບັດຕາມລັດຖະທຳມະນູນ, ກົດໝາຍ ແລະ ລະບຽບການ ຢ່າງເຂັ້ມງວດ;
2. ມີປະຊາທິປະໄຕ, ພາວະວິໄສ ແລະ ມີຄວາມໂປ່ງໃສ;
3. ຮັບປະກັນຄວາມຊັດເຈນ, ຍຸຕິທຳ, ທັນເວລາ ແລະ ເປີດເຜີຍ ຕາມລະບຽບການ;
4. ມີສ່ວນຮ່ວມຂອງການຈັດຕັ້ງທຸກຂັ້ນ ລວມທັງສື່ມວນຊົນ ແລະ ພົນລະເມືອງ;
5. ບໍ່ສ້າງຄວາມຫຍຸ້ງຍາກ ໃຫ້ແກ່ການເຄື່ອນໄຫວວຽກງານຂອງບຸກຄົນ, ນິຕິບຸກຄົນ ຫຼື ການຈັດຕັ້ງ ທີ່ຖືກກວດກາ.

**ມາດຕາ 6 ຄວາມຮັບຜິດຊອບ ກ່ຽວກັບການກວດກາລັດ**

ນາຍົກລັດຖະມົນຕີ, ລັດຖະມົນຕີ, ຫົວໜ້າອົງການ, ຫົວໜ້າອົງການລັດທຽບເທົ່າກະຊວງ, ເຈົ້າແຂວງ, ເຈົ້າຄອງນະຄອນຫຼວງ, ເຈົ້າເມືອງ, ຫົວໜ້າເທດສະບານ, ເຈົ້ານະຄອນ ແລະ ຫົວໜ້າອົງການຈັດຕັ້ງອື່ນຂອງລັດທີ່ກ່ຽວຂ້ອງ ມີໜ້າທີ່ຈັດຕັ້ງ, ຊີ້ນຳ, ສ້າງເງື່ອນໄຂອຳນວຍຄວາມສະດວກໃນການເຄື່ອນໄຫວກວດກາລັດ ໂດຍສະເພາະການອະນຸມັດແຜນການ, ໂຄງການກວດກາລັດ ໃນຂອບເຂດຄວາມຮັບຜິດຊອບ, ສິດ, ໜ້າທີ່ຂອງຕົນ ແລະ ແກ້ໄຂຜົນຂອງການກວດກາລັດຢ່າງເຂັ້ມງວດ ຕາມກົດໝາຍ.

ປະທານອົງການກວດກາລັດ ແຕ່ລະຂັ້ນ, ຫົວໜ້າຄະນະກວດກາ, ພະນັກງານ-ລັດຖະກອນກວດກາລັດ ຕ້ອງປະຕິບັດຕາມພາລະບົດບາດ, ສິດ, ໜ້າທີ່ຂອງຕົນ ຕາມກົດໝາຍສະບັບນີ້ ແລະ ກົດໝາຍອື່ນທີ່ກ່ຽວຂ້ອງຢ່າງເຂັ້ມງວດ ແລະ ຕ້ອງຮັບຜິດຊອບ ຕໍ່ການປະຕິບັດໜ້າທີ່, ການຕົກລົງ ຫຼື ການກະທຳຂອງຕົນ ທີ່ບໍ່ຖືກຕ້ອງຕາມກົດໝາຍ ແລະ ລະບຽບການ ຊຶ່ງກໍ່ຄວາມເສຍຫາຍໃຫ້ແກ່ຜູ້ຖືກກວດກາ.

**ມາດຕາ 7 ສິດ ແລະ ພັນທະ ປະກອບສ່ວນໃນການກວດກາລັດ**

ບັນດາອົງການຈັດຕັ້ງຂອງພັກ, ລັດ, ແນວລາວສ້າງຊາດ, ອົງການຈັດຕັ້ງມະຫາຊົນ, ອົງການຈັດຕັ້ງສັງຄົມ, ສື່ມວນຊົນ, ພົນລະເມືອງ ມີສິດ ແລະ ພັນທະປະກອບສ່ວນເຂົ້າໃນວຽກງານກວດກາລັດ ດ້ວຍການເຂົ້າຮ່ວມ, ອຳນວຍຄວາມສະດວກ, ລາຍງານ, ສະໜອງຂໍ້ມູນ, ຫຼັກຖານຢ່າງທັນການ ໃຫ້ຄວາມຮ່ວມມືໃນການຈັດຕັ້ງປະຕິບັດການຕົກລົງ ກ່ຽວກັບການແກ້ໄຂຜົນຂອງການກວດກາ ໃຫ້ສຳເລັດ.

**ມາດຕາ 8 ການປົກປ້ອງ**

ພະນັກງານ-ລັດຖະກອນກວດກາລັດ, ຜູ້ລາຍງານ, ຜູ້ໃຫ້ຂໍ້ມູນ, ພະຍານ, ຜູ້ຊ່ຽວຊານ ແລະ ຜູ້ເຂົ້າຮ່ວມໃນການກວດກາ ໄດ້ຮັບການປົກປ້ອງຕາມກົດໝາຍ ແລະ ລະບຽບການ ຈາກການແກ້ແຄ້ນ, ຂົ່ມຂູ່ຕໍ່ຊີວິດ, ສຸຂະພາບ, ອິດສະລະພາບ, ກຽດຊື່ສຽງ, ຊັບສິນ ຂອງຜູ້ຖືກກວດກາ ຫຼື ຜູ້ອື່ນ.

**ມາດຕາ 9 (ປັບປຸງ) ຂອບເຂດການນຳໃຊ້ກົດໝາຍ**

ກົດໝາຍສະບັບນີ້ ນຳໃຊ້ສຳລັບການຈັດຕັ້ງ, ພະນັກງານ-ລັດຖະກອນ, ທະຫານ, ຕຳຫຼວດ ແລະ ພະນັກງານວິສາຫະກິດຂອງລັດ, ນາຍບ້ານ ແລະ ຜູ້ໄດ້ຮັບມອບສິດຈາກທາງການ ທີ່ປະຕິບັດໜ້າທີ່ ຢູ່ອົງການຈັດຕັ້ງຂອງລັດ ແລະ ລັດວິສາຫະກິດ ແຕ່ຂັ້ນສູນກາງ ລົງຮອດຂັ້ນທ້ອງຖິ່ນ.

**ມາດຕາ 10 ການຮ່ວມມືສາກົນ**

ລັດ ສົ່ງເສີມການພົວພັນຮ່ວມມືກັບຕ່າງປະເທດ ແລະ ອົງການຈັດຕັ້ງສາກົນ ກ່ຽວກັບວຽກງານກວດກາລັດ ດ້ວຍການແລກປ່ຽນບົດຮຽນ, ຂໍ້ມູນ ຂ່າວສານ, ເຕັກນິກ, ເຕັກໂນໂລຊີ, ຝຶກອົບຮົມ ຫຼື ສໍາມະນາ, ຍົກລະດັບຄວາມຮູ້ຄວາມສາມາດດ້ານວິຊາການ ເພື່ອພັດທະນາວຽກງານກວດກາ ໃຫ້ມີຄຸນນະພາບ, ເຂັ້ມແຂງ ແລະ ທັນສະໄໝ.

## ພາກທີ II
## ປະເພດ, ບ່ອນອີງ, ຮູບການ, ເນື້ອໃນ ແລະ ເປົ້າໝາຍ
## ຂອງການກວດກາລັດ

**ມາດຕາ 11 ປະເພດການກວດກາລັດ**

ການກວດກາລັດ ມີ ສອງປະເພດ ດັ່ງນີ້:

1. ການກວດກາ ຕາມຂັ້ນບໍລິຫານການປົກຄອງ;
2. ການກວດກາ ຕາມຂະແໜງການ.

**ມາດຕາ 12 (ປັບປຸງ) ບ່ອນອີງໃນການຕົກລົງກວດກາລັດ**

ການຕົກລົງກວດກາລັດ ອີງໃສ່:

1. ແຜນການ, ໂຄງການ;
2. ຂໍ້ຕົກລົງ, ຄໍາສັ່ງ, ແຈ້ງການ;
3. ຄໍາສະເໜີຂອງພົນລະເມືອງ;
4. ຜົນຂອງການກວດສອບ;
5. ມະຕິຂອງ ສະພາແຫ່ງຊາດ ຫຼື ສະພາປະຊາຊົນຂັ້ນແຂວງ;
6. ການພົບເຫັນການລະເມີດກົດໝາຍ ແລະ ລະບຽບການ.

**ມາດຕາ 13 ຮູບການກວດກາລັດ**

ການກວດກາລັດ ມີ ສາມ ຮູບການ ດັ່ງນີ້:

1. ການກວດກາ ຕາມແຜນການປົກກະຕິ ຊຶ່ງແມ່ນ ການກວດກາຕາມແຜນການຂອງການບໍລິຫານ ແລະ ອົງການກວດກາລັດແຕ່ລະຂັ້ນ ທີ່ໄດ້ວາງໄວ້;

2. ການກວດກາ ຕາມຄໍາສັ່ງ ຫຼື ຄໍາສະເໜີ ຊຶ່ງແມ່ນ ການກວດກາຕາມຄໍາສັ່ງ, ຂໍ້ຕົກລົງ, ຄໍາແນະນໍາ, ແຈ້ງການ ຂອງຫົວໜ້າອົງການບໍລິຫານ, ຂອງອົງການກວດກາລັດແຕ່ລະຂັ້ນ ແລະ ຄໍາສະເໜີຂອງພົນລະເມືອງ ໂດຍແຈ້ງໃຫ້ເປົ້າໝາຍຖືກກວດກາ ຊາບລ່ວງໜ້າ;

3. ການກວດກາ ແບບກະທັນຫັນ ຊຶ່ງແມ່ນ ການກວດກາຢ່າງຮີບດ່ວນ ໂດຍບໍ່ໄດ້ແຈ້ງໃຫ້ເປົ້າໝາຍຖືກກວດກາ ຊາບລ່ວງໜ້າ.

**ມາດຕາ 14 (ປັບປຸງ) ເນື້ອໃນການກວດກາລັດ**

ການກວດກາລັດມີເນື້ອໃນ ດັ່ງນີ້ :

1. ການປະຕິບັດນະໂຍບາຍ, ກົດໝາຍ, ລະບຽບການ, ແຜນການ, ໂຄງການ, ສິດ, ໜ້າທີ່ ແລະ ຄວາມຮັບຜິດຊອບ ໃນການຄຸ້ມຄອງບໍລິຫານລັດ;

2. ການປະຕິບັດວຽກງານດ້ານວິຊາສະເພາະ, ເຕັກນິກ, ຫຼັກການຄຸ້ມຄອງຂອງຂະແໜງການ;

3. ຜົນການກວດສອບ ຕາມການສະເໜີຂອງອົງການກວດສອບແຫ່ງລັດ, ຕາມມະຕິກອງປະຊຸມ ສະພາແຫ່ງຊາດ ຫຼື ສະພາປະຊາຊົນຂັ້ນແຂວງ.

**ມາດຕາ 15 ເປົ້າໝາຍການກວດກາລັດ**

ເປົ້າໝາຍການກວດກາ ແມ່ນ ບຸກຄົນ, ນິຕິບຸກຄົນ ຫຼື ການຈັດຕັ້ງ ທີ່ຂຶ້ນກັບອົງການບໍລິຫານການປົກຄອງ, ຂະແໜງການບໍລິຫານລັດແຕ່ລະຂັ້ນ ແລະ ອົງການຈັດຕັ້ງອື່ນທີ່ກ່ຽວຂ້ອງ.

## ພາກທີ III
## ການເຄື່ອນໄຫວກວດກາລັດ
### ໝວດທີ 1
### ຂັ້ນຕອນ ຂອງການກວດກາລັດ

**ມາດຕາ 16 ຂັ້ນຕອນ ຂອງການກວດກາລັດ**

ການກວດກາລັດ ຕ້ອງປະຕິບັດຕາມຂັ້ນຕອນ ດັ່ງນີ້:

1. ການຕົກລົງກວດກາ;
2. ການກະກຽມການກວດກາ;
3. ການດຳເນີນການກວດກາ;
4. ການສະຫຼຸບຜົນຂອງການກວດກາ;
5. ການລາຍງານຜົນຂອງການກວດກາ.

**ມາດຕາ 17 (ປັບປຸງ) ການຕົກລົງກວດກາ**

ຜູ້ຕົກລົງໃຫ້ກວດກາ ມີ ດັ່ງນີ້:

1. ຜູ້ຕົກລົງກວດກາ ຕາມຂັ້ນບໍລິຫານການປົກຄອງ:
   - ນາຍົກລັດຖະມົນຕີ;
   - ປະທານອົງການກວດກາລັດຖະບານ;
   - ເຈົ້າແຂວງ, ເຈົ້າຄອງນະຄອນຫຼວງ, ປະທານອົງການກວດກາລັດຂັ້ນແຂວງ;
   - ເຈົ້າເມືອງ, ຫົວໜ້າເທດສະບານ, ເຈົ້ານະຄອນ, ປະທານອົງການກວດກາລັດຂັ້ນເມືອງ.
2. ຜູ້ຕົກລົງກວດກາ ຕາມຂະແໜງການ:
   - ລັດຖະມົນຕີ, ປະທານ ຫຼື ຫົວໜ້າອົງການ, ຫົວໜ້າອົງການລັດທຽບເທົ່າກະຊວງ;
   - ຫົວໜ້າກົມ ຫຼື ຫົວໜ້າອົງການທຽບເທົ່າກົມ ທີ່ມີກົງຈັກກວດກາລັດຂຶ້ນກັບ;
   - ຫົວໜ້າພະແນກ ຫຼື ຫົວໜ້າອົງການລັດທຽບເທົ່າພະແນກຂັ້ນແຂວງ;

- ຫ້ອງການຂັ້ນເມືອງ ທີ່ມີກິຈັກກອດກາລັດຂຶ້ນກັບ.

**ມາດຕາ 18 ການກະກຽມການກວດກາ**

ການກະກຽມການກວດກາ ໃຫ້ປະຕິບັດ ດັ່ງນີ້:

1. ແຕ່ງຕັ້ງຄະນະກວດກາ ຫຼື ຄະນະກວດກາສະເພາະກິດ;

2. ເກັບກຳຂໍ້ມູນ, ເອກະສານ ເພື່ອຄົ້ນຄວ້າ, ວິເຄາະ, ວິໄຈ, ສ້າງແຜນການກວດກາ ໂດຍກຳນົດຈຸດປະສົງ, ເນື້ອໃນຂອງການກວດກາ, ຮ່າງຄຳຖາມເຈາະຈີ້ມ, ຮ່າງບົດບັນທຶກ, ກຽມໂຄງຮ່າງບົດລາຍງານ ເພື່ອໃຫ້ເປົ້າໝາຍລາຍງານ ແລະ ຕາຕະລາງເຄື່ອນໄຫວລະອຽດໃນແຕ່ລະໄລຍະ;

3. ກະກຽມນິຕິກຳຕ່າງໆ ທີ່ພົວພັນກັບການກວດກາ, ງົບປະມານ, ພາຫະນະ, ວັດຖຸປະກອບຮັບໃຊ້ທີ່ຈຳເປັນ;

4. ຈັດຕັ້ງເຊື່ອມຊຶມ, ແນະນຳພະນັກງານ-ລັດຖະກອນ ທີ່ຈະລົງກວດກາໃຫ້ກຳແໜ້ນຈຸດປະສົງ, ລະດັບຄາດໝາຍ, ເນື້ອໃນຂອງການກວດກາ, ລະບຽບການ ພາຍໃນຂອງຄະນະກວດກາ ແລະ ແບ່ງຄວາມຮັບຜິດຊອບ ໃຫ້ແຕ່ລະຄົນໃນຄະນະກວດກາ.

**ມາດຕາ 19 ການດຳເນີນການກວດກາ**

ການກວດກາ ຕ້ອງດຳເນີນ ດັ່ງນີ້ :

1. ແຈ້ງຂໍ້ຕົກລົງ ແລະ ແຜນການ ກ່ຽວກັບການກວດກາ ຕໍ່ຫົວໜ້າອົງການ ຂອງເປົ້າໝາຍຖືກກວດກາ ແລະ ຜູ້ຖືກກວດກາ ຊາບກ່ອນການດຳເນີນການກວດກາ ເຈັດວັນ ລັດຖະການ ເວັ້ນເສຍແຕ່ການກວດກາແບບກະທັນຫັນ;

2. ດຳເນີນການກວດກາ ຕາມແຜນການ ເປັນຕົ້ນ ເກັບກຳຂໍ້ມູນ, ຮັບຟັງການລາຍງານ ຂອງເປົ້າໝາຍຖືກກວດກາ ພ້ອມທັງເຮັດບົດບັນທຶກການລາຍງານ ແລະ ການມອບ-ຮັບເອກະສານ;

3. ລາຍງານ ແລະ ຂໍການຊີ້ນຳ ກ່ຽວກັບການດຳເນີນການກວດກາ ໃນແຕ່ລະໄລຍະ ຈາກຂັ້ນເທິງຂອງຕົນ;

4. ເຮັດບົດບັນທຶກການກວດກາ ແລະ ບົດສະຫຼຸບຜົນການກວດກາ.

**ມາດຕາ 20 (ປັບປຸງ) ການສະຫຼຸບຜົນຂອງການກວດກາ**

ການສະຫຼຸບຜົນຂອງການກວດກາ ຕ້ອງປະຕິບັດ ດັ່ງນີ້ :

1. ສັງລວມບັນດາເອກະສານ, ຂໍ້ມູນ, ຫຼັກຖານຕ່າງໆ, ບົດບັນທຶກ ທີ່ໄດ້ກວດກາມາເປັນບົດສະຫຼຸບຜົນຂອງການກວດກາ;

2. ຕີລາຄາ, ໄຈ້ແຍກໃຫ້ລະອຽດຈະແຈ້ງ ດ້ານດີ, ດ້ານອ່ອນ, ຄວາມຖືກ, ຄວາມຜິດ ຂອງເປົ້າໝາຍຖືກກວດກາ ແລະ ສະເໜີມາດຕະການ, ວິທີການແກ້ໄຂ ຕາມກົດໝາຍ;

3. ຜ່ານຮ່າງບົດສະຫຼຸບຜົນການກວດກາພາຍໃນຄະນະກວດກາ ແລ້ວສົ່ງຮ່າງບົດສະຫຼຸບດັ່ງກ່າວໃຫ້ຫົວໜ້າອົງການຈັດຕັ້ງ ຂອງເປົ້າໝາຍຖືກກວດກາ ເພື່ອມີຄຳເຫັນ ແລະ ຢັ້ງຢືນ ຊ້າສຸດພາຍໃນເວລາ ສິບຫ້າວັນລັດຖະການ ນັບແຕ່ວັນໄດ້ຮັບເປັນຕົ້ນໄປ;

4. ຄະນະກວດກາ ແລະ ຫົວໜ້າອົງການຈັດຕັ້ງ ຂອງເປົ້າໝາຍຖືກກວດກາ ລົງລາຍເຊັນ ໃສ່ບົດສະຫຼຸບ ເພື່ອຢັ້ງຢືນຜົນຂອງການກວດກາ.

**ມາດຕາ 21 ການລາຍງານຜົນຂອງການກວດກາ**

ພາຍຫຼັງສຳເລັດການກວດກາແລ້ວ ຄະນະກວດກາ ຕ້ອງສັງລວມສະຫຼຸບຜົນຂອງການກວດກາ ແລະ ລາຍງານ ໃຫ້ຜູ້ອອກຂໍ້ຕົກລົງກວດກາ ເພື່ອພິຈາລະນາແກ້ໄຂຜົນຂອງການກວດກາ ຕາມກົດໝາຍ ແລະ ສັງລວມລາຍງານຜົນຂອງການກວດກາ ໃຫ້ຂັ້ນເທິງຂອງຕົນ.

**ມາດຕາ 22 (ປັບປຸງ) ກຳນົດເວລາການກວດກາ**

ກຳນົດເວລາ ດຳເນີນການກວດກາ ມີ ດັ່ງນີ້:

1. ອົງການກວດກາລັດຖະບານ ກວດກາແຕ່ລະເປົ້າໝາຍ ບໍ່ໃຫ້ເກີນ ເກົ້າສິບວັນ ລັດຖະການ ນັບແຕ່ວັນດຳເນີນການກວດກາ ເປັນຕົ້ນໄປ, ຖ້າຫາກການກວດກາບໍ່ສຳເລັດ ກໍສາມາດດຳເນີນຕໍ່ໄປໄດ້ຕື່ມອີກ ສາມສິບວັນ ລັດຖະການ, ໃນກໍລະນີທີ່ມີຄວາມຫຍຸ້ງຍາກສັບສົນເປັນພິເສດ ຊຶ່ງພົວພັນເຖິງຫຼາຍຂະແໜງການ, ຫຼາຍທ້ອງຖິ່ນ ກໍສາມາດຕໍ່ເວລາໄດ້ຕື່ມອີກ ແຕ່ທັງໝົດບໍ່ໃຫ້ເກີນ ຮ້ອຍແປດສິບວັນ ລັດຖະການ;

2. ອົງການກວດກາລັດຂັ້ນແຂວງ, ກົມກວດກາລັດຂັ້ນກະຊວງ ກວດກາແຕ່ລະເປົ້າໝາຍ ບໍ່ໃຫ້ເກີນ ຫົກສິບວັນ ລັດຖະການ ນັບແຕ່ວັນດຳເນີນການກວດກາ ເປັນຕົ້ນໄປ, ໃນກໍລະນີ ທີ່ມີຄວາມຫຍຸ້ງຍາກສັບສົນ ກໍສາມາດຕໍ່ເວລາໄດ້ຕື່ມອີກ ແຕ່ທັງໝົດບໍ່ໃຫ້ເກີນ ເກົ້າສິບວັນ ລັດຖະການ;

3. ອົງການກວດກາລັດຂັ້ນເມືອງ, ພະແນກກວດກາລັດຂອງກົມວິຊາການຂັ້ນກະຊວງ ທີ່ມີການຈັດຕັ້ງກວດກາລັດ, ຂະແໜງກວດກາລັດ ຂັ້ນພະແນກການຂັ້ນແຂວງ ທີ່ມີການຈັດຕັ້ງກວດກາລັດ ກວດກາແຕ່ລະເປົ້າໝາຍ ບໍ່ໃຫ້ເກີນ ສາມສິບວັນ ລັດຖະການ ນັບແຕ່ວັນດຳເນີນການກວດກາ ເປັນຕົ້ນໄປ, ໃນກໍລະນີ ທີ່ມີຄວາມຫຍຸ້ງຍາກສັບສົນ ຫຼື ຢູ່ຫ່າງໄກສອກຫຼີກ ກໍສາມາດດຳເນີນຕໍ່ໄປໄດ້ຕື່ມອີກ ແຕ່ທັງໝົດບໍ່ໃຫ້ເກີນ ຫົກສິບວັນ ລັດຖະການ;

ໃນກໍລະນີ ຫ້ອງການຂັ້ນເມືອງ ມີການຈັດຕັ້ງໜ່ວຍກວດກາລັດ ການກວດກາແຕ່ລະເປົ້າໝາຍ ບໍ່ໃຫ້ເກີນ ສິບຫ້າວັນ ລັດຖະການ ນັບແຕ່ວັນດຳເນີນການກວດກາ ເປັນຕົ້ນໄປ, ໃນກໍລະນີ ທີ່ມີຄວາມຫຍຸ້ງຍາກສັບສົນ ກໍສາມາດດຳເນີນຕໍ່ໄປໄດ້ຕື່ມອີກ ແຕ່ທັງໝົດບໍ່ໃຫ້ເກີນ ສາມສິບວັນ ລັດຖະການ.

## ໝວດທີ 2
## ການພິຈາລະນາ ແລະ ແກ້ໄຂ ຜົນຂອງການກວດກາ

**ມາດຕາ 23 (ປັບປຸງ) ການພິຈາລະນາ ຜົນຂອງການກວດກາ**

ຜູ້ຕົກລົງກວດກາ ຕາມທີ່ໄດ້ກຳນົດໄວ້ໃນມາດຕາ 17 ຂອງກົດໝາຍສະບັບນີ້ ຕ້ອງຄົ້ນຄວ້າພິຈາລະນາຜົນຂອງການກວດກາໃຫ້ສຳເລັດ ພາຍໃນເວລາ ສິບຫ້າວັນ ລັດຖະການ ນັບແຕ່ວັນໄດ້ຮັບບົດສະຫຼຸບຜົນຂອງການກວດກາເປັນຕົ້ນໄປ ແລະ ແຈ້ງຜົນຂອງການພິຈາລະນານັ້ນ ໃຫ້ອົງການທີ່ກ່ຽວຂ້ອງ ຂອງເປົ້າໝາຍຖືກກວດກາ ແລະ ຜູ້ຖືກກວດກາຊາບ ພາຍໃນເວລາ ເຈັດວັນ ລັດຖະການ ເພື່ອຈັດຕັ້ງປະຕິບັດ. ໃນກໍລະນີ ການຄົ້ນຄວ້າພິຈາລະນາຜົນຂອງການກວດກາ ຫາກຕິດພັນກັບຫຼາຍພາກສ່ວນ ແລະ ມີຄວາມຫຍຸ້ງຍາກ ກໍສາມາດຕໍ່ເວລາໄດ້ຕື່ມ ຫ້າວັນ ລັດຖະການ.

ຖ້າມີການລະເມີດ ກົດໝາຍ ແລະ ລະບຽບການ ໃນສະຖານເບົາ, ສ້າງຄວາມເສຍຫາຍບໍ່ຫຼວງຫຼາຍ ຕາມທີ່ໄດ້ກຳນົດໄວ້ໃນກົດໝາຍວ່າດ້ວຍການຕ້ານການສໍ້ລາດບັງຫຼວງ ຜູ້ອອກຂໍ້ຕົກລົງກວດກາ ຕ້ອງສະເໜີໃຫ້

ອົງການທີ່ກ່ຽວຂ້ອງ ຂອງເປົ້າໝາຍຖືກກວດກາ ແກ້ໄຂ ຕາມທີ່ໄດ້ກຳນົດໄວ້ໃນມາດຕາ 74, 75 ແລະ 76 ຂອງກົດໝາຍສະບັບນີ້.

ໃນກໍລະນີ ມີການລະເມີດທາງແພ່ງ ອົງການກວດກາລັດ ຕ້ອງສົ່ງສຳນວນເອກະສານກວດກາ ໃຫ້ພາກສ່ວນທີ່ກ່ຽວຂ້ອງ ຫຼື ອົງການໄອຍະການປະຊາຊົນ ຮ້ອງຟ້ອງຕໍ່ສານປະຊາຊົນ ຕາມທີ່ໄດ້ກຳນົດໄວ້ໃນກົດໝາຍວ່າດ້ວຍການດຳເນີນຄະດີແພ່ງ.

ໃນກໍລະນີ ມີການກະທຳຜິດທາງອາຍາ ອົງການກວດກາລັດ ຕ້ອງສົ່ງສຳນວນເອກະສານກວດກາ ໃຫ້ອົງການສືບສວນ-ສອບສວນທີ່ກ່ຽວຂ້ອງ ເພື່ອດຳເນີນການສືບສວນ-ສອບສວນ ແລະ ປະກອບສຳນວນຄະດີ ສົ່ງໃຫ້ອົງການໄອຍະການປະຊາຊົນ ສັ່ງຟ້ອງຕໍ່ສານປະຊາຊົນ ຕາມທີ່ໄດ້ກຳນົດໄວ້ໃນກົດໝາຍວ່າດ້ວຍການດຳເນີນຄະດີອາຍາ.

**ມາດຕາ 24 (ໃໝ່) ການແກ້ໄຂ ຜົນຂອງການກວດກາ**

ພາຍຫຼັງ ອົງການທີ່ກ່ຽວຂ້ອງ ຂອງເປົ້າໝາຍຖືກກວດກາ ໄດ້ຮັບຂໍ້ຕົກລົງແກ້ໄຂຜົນຂອງການກວດກາແລ້ວ ຕ້ອງຈັດຕັ້ງປະຕິບັດໃຫ້ເຂັ້ມງວດ, ເດັດຂາດ, ທັນການ ແລະ ຕ້ອງແຈ້ງຜົນຂອງການແກ້ໄຂ ໃຫ້ຜູ້ຕົກລົງກວດກາຊາບ ພາຍໃນເວລາ ສາມສິບວັນ ລັດຖະການ ນັບແຕ່ວັນໄດ້ຮັບຂໍ້ຕົກລົງແກ້ໄຂຜົນຂອງການກວດກາ ເປັນຕົ້ນໄປ.

ໃນກໍລະນີ ອົງການຈັດຕັ້ງຂອງເປົ້າໝາຍຖືກກວດກາ ຫຼື ຜູ້ເປັນຫົວໜ້າ ຫາກແກ້ໄຂຜົນຂອງການກວດກາ ບໍ່ຖືກຕ້ອງກັບການຕົກລົງຂອງຂັ້ນເທິງ ຜູ້ເປັນຫົວໜ້າ ຈະຖືກກ່າວເຕືອນ ໂດຍໃຫ້ຂຽນໃບສຳຫຼວດຕົນເອງ ແລະ ບັນທຶກຄວາມຜິດໄວ້ເປັນຫຼັກຖານ.

ໃນກໍລະນີ ບໍ່ແກ້ໄຂຜົນຂອງການກວດກາ ຜູ້ເປັນຫົວໜ້າ ຈະຖືກໂຈະການເລື່ອນຂັ້ນເງິນເດືອນ ແລະ ການຍ້ອງຍໍ, ຫຼຸດຕຳແໜ່ງບໍລິຫານ ຫຼື ຍົກຍ້າຍໄປຮັບໜ້າທີ່ອື່ນ ທີ່ມີຕຳແໜ່ງຕໍ່າກວ່າເກົ່າ, ປົດຕຳແໜ່ງບໍລິຫານ ພ້ອມທັງບັນທຶກໄວ້ໃນສຳນວນເອກະສານຊີວະປະຫວັດຂອງພະນັກງານ-ລັດຖະກອນ ຫຼື ໃຫ້ອອກຈາກລັດຖະການ ໂດຍບໍ່ໄດ້ຮັບນະໂຍບາຍໃດໆ.

**ມາດຕາ 25 (ປັບປຸງ) ການຕິດຕາມ, ກວດກາ ການແກ້ໄຂຜົນຂອງການກວດກາ**

ການຕິດຕາມ, ກວດກາ ການແກ້ໄຂຜົນຂອງການກວດກາ ຂອງອົງການບໍລິຫານລັດຂັ້ນໃດ ແມ່ນຄວາມຮັບຜິດຊອບຂອງອົງການກວດກາລັດຂັ້ນນັ້ນ ເປັນຜູ້ຕິດຕາມ, ຊຸກຍູ້, ກວດກາ. ຜ່ານການ ຕິດຕາມ, ຊຸກຍູ້, ກວດກາ ຖ້າເຫັນວ່າ ອົງການທີ່ກ່ຽວຂ້ອງ ຂອງເປົ້າໝາຍຖືກກວດກາ ບໍ່ແກ້ໄຂ ຫຼື ມີການແກ້ໄຂ ທີ່ເຫັນວ່າບໍ່ເໝາະສົມ ອົງການກວດກາລັດຂັ້ນນັ້ນ ມີສິດສະເໜີຕໍ່ຜູ້ອອກຂໍ້ຕົກລົງແກ້ໄຂຜົນຂອງການກວດກາ ຊີ້ນຳໃຫ້ອົງການທີ່ກ່ຽວຂ້ອງ ຂອງເປົ້າໝາຍຖືກກວດກາ ແກ້ໄຂ ຫຼື ແກ້ໄຂຄືນ; ຖ້າອົງການທີ່ກ່ຽວຂ້ອງ ຂອງເປົ້າໝາຍຖືກກວດກາບໍ່ປະຕິບັດ ໃຫ້ນຳໃຊ້ມາດຕະການ ທີ່ໄດ້ກຳນົດໄວ້ໃນມາດຕາ 24 ຂອງກົດໝາຍສະບັບນີ້.

**ມາດຕາ 26 (ໃໝ່) ການເປີດເຜີຍ ຜົນຂອງການກວດກາ**

ຜົນຂອງການກວດກາ ທີ່ຖືກຮັບຮອງ ແລະ ໄດ້ຮັບອະນຸຍາດຈາກຜູ້ຕົກລົງໃຫ້ກວດກາ ສາມາດເປີດເຜີຍ ດ້ວຍຮູບການໃດໜຶ່ງຕາມຄວາມເໝາະສົມ ດັ່ງນີ້:

1. ແຈ້ງຂ່າວ ໃຫ້ການຈັດຕັ້ງທີ່ກ່ຽວຂ້ອງ;
2. ແຈ້ງຜົນການກວດກາ ສູ່ສັງຄົມ;

3. ຮູບການອື່ນ.

**ມາດຕາ 27 ກຳນົດເວລາ ການເກັບຮັກສາເອກະສານ**

ເອກະສານ ກ່ຽວກັບຜົນຂອງການກວດກາ ຕ້ອງຄຸ້ມຄອງ ແລະ ເກັບຮັກສາໄວ້ຢ່າງໜ້ອຍ ສິບ ປີ.

## ພາກທີ IV
## ອົງການກວດກາລັດ
### ໝວດທີ 1
### ລະບົບການຈັດຕັ້ງ ຂອງອົງການກວດກາລັດ

**ມາດຕາ 28 ອົງການກວດກາລັດ**

ອົງການກວດກາລັດ ແມ່ນ ອົງການທີ່ໄດ້ຮັບການສ້າງຕັ້ງຂຶ້ນ ຕາມຂັ້ນບໍລິຫານການປົກຄອງ ແລະ ຕາມຂະແໜງການ ຊຶ່ງຢູ່ພາຍໃຕ້ການຊີ້ນຳໂດຍກົງ ຂອງຫົວໜ້າອົງການບໍລິຫານແຕ່ລະຂັ້ນ ແລະ ຢູ່ພາຍໃຕ້ ການແນະນຳດ້ານວຽກງານວິຊາສະເພາະ ຂອງອົງການກວດກາລັດຂັ້ນເທິງ.

**ມາດຕາ 29 (ປັບປຸງ) ລະບົບການຈັດຕັ້ງ ຂອງອົງການກວດກາລັດ**

ລະບົບການຈັດຕັ້ງຂອງອົງການກວດກາລັດ ມີ ດັ່ງນີ້:

1. ອົງການກວດກາລັດ ຕາມຂັ້ນບໍລິຫານການປົກຄອງ ປະກອບດ້ວຍ:
   - ອົງການກວດກາລັດຖະບານ;
   - ອົງການກວດກາລັດ ຂັ້ນແຂວງ;
   - ອົງການກວດກາລັດ ຂັ້ນເມືອງ.
2. ອົງການກວດກາລັດ ຕາມຂະແໜງການ ປະກອບດ້ວຍ:
   - ກົມກວດກາລັດ ຂັ້ນກະຊວງ;
   - ຂະແໜງກວດກາລັດ ຂັ້ນພະແນກການ ຂັ້ນແຂວງ.

ໃນກໍລະນີຈຳເປັນ ກົມວິຊາການ ຫຼື ອົງການທຽບເທົ່າກົມ ທີ່ຂຶ້ນກັບຂັ້ນກະຊວງ ແລະ ຫ້ອງການຂັ້ນເມືອງ ອາດສ້າງຕັ້ງກົງຈັກກວດກາລັດ ຂອງຕົນຂຶ້ນກໍໄດ້.

### ໝວດທີ 2
### ທີ່ຕັ້ງ, ພາລະບົດບາດ, ສິດ ແລະ ໜ້າທີ່ ຂອງອົງການກວດກາລັດ ຕາມຂັ້ນບໍລິຫານການປົກຄອງ

**ມາດຕາ 30 ທີ່ຕັ້ງ ແລະ ພາລະບົດບາດ ຂອງອົງການກວດກາລັດຖະບານ**

ອົງການກວດກາລັດຖະບານ ແມ່ນ ອົງການກວດກາລັດຂັ້ນສູນກາງ, ເປັນອົງການລັດທຽບເທົ່າກະຊວງ ແລະ ຢູ່ໃນໂຄງປະກອບກົງຈັກຂອງລັດຖະບານ, ມີພາລະບົດບາດເປັນເສນາທິການ ໃຫ້ລັດຖະບານ ກ່ຽວກັບ ການກວດກາລັດ, ການສະກັດກັ້ນ ແລະ ຕ້ານການສໍ້ລາດບັງຫຼວງ, ການຄົ້ນຄວ້າ, ພິຈາລະນາຄຳສະເໜີຂອງ

ພົນລະເມືອງ ໃນຂອບເຂດສິດ, ໜ້າທີ່ ຂອງລັດຖະບານ ແລະ ຊີ້ນໍາວຽກງານດັ່ງກ່າວ ໃນຂອບເຂດທົ່ວປະເທດ.

**ມາດຕາ 31 (ປັບປຸງ) ສິດ ແລະ ໜ້າທີ່ ຂອງອົງການກວດກາລັດຖະບານ**

ອົງການກວດກາລັດຖະບານ ມີ ສິດ ແລະ ໜ້າທີ່ ດັ່ງນີ້:

1. ຄົ້ນຄວ້າ ສ້າງນະໂຍບາຍ, ແຜນຍຸດທະສາດ, ກົດໝາຍ, ລັດຖະບັນຍັດ, ດໍາລັດ ກ່ຽວກັບວຽກງານກວດກາລັດ, ວຽກງານສະກັດກັ້ນ ແລະ ຕ້ານການສໍ້ລາດບັງຫຼວງ ເພື່ອສະເໜີລັດຖະບານ ພິຈາລະນາ;
2. ຜັນຂະຫຍາຍ ນະໂຍບາຍ, ແຜນຍຸດທະສາດ, ກົດໝາຍ, ລັດຖະບັນຍັດ, ດໍາລັດ ເປັນແຜນການ, ແຜນງານ ແລະ ໂຄງການລະອຽດ ຂອງອົງການຕົນ ແລ້ວຈັດຕັ້ງປະຕິບັດ;
3. ໂຄສະນາ, ເຜີຍແຜ່ ນະໂຍບາຍ, ກົດໝາຍ ແລະ ລະບຽບການ ກ່ຽວກັບວຽກງານກວດກາ;
4. ອອກຄໍາສັ່ງ, ຂໍ້ຕົກລົງ, ຄໍາແນະນໍາ ແລະ ແຈ້ງການ ເພື່ອຄຸ້ມຄອງມະຫາພາກ ກ່ຽວກັບວຽກງານກວດກາລັດ;
5. ຊີ້ນໍາ, ຕິດຕາມ, ກວດກາ ການຈັດຕັ້ງປະຕິບັດວຽກງານກວດກາລັດ ໃນຂອບເຂດທົ່ວປະເທດ;
6. ສ້າງ ບໍາລຸງ, ຍົກລະດັບວິຊາສະເພາະວຽກງານກວດກາ ໃຫ້ແກ່ພະນັກງານ-ລັດຖະກອນ ທີ່ເຮັດວຽກງານກວດກາລັດ;
7. ຕິດຕາມ, ກວດກາ ການປະຕິບັດນະໂຍບາຍ, ກົດໝາຍ, ລະບຽບການ, ແຜນການ, ພາລະບົດບາດ, ສິດ, ໜ້າທີ່ ແລະ ຄວາມຮັບຜິດຊອບຂອງ ຂັ້ນກະຊວງ, ຂັ້ນແຂວງ ແລະ ອົງການຈັດຕັ້ງອື່ນຂອງລັດທີ່ກ່ຽວຂ້ອງ;
8. ຕິດຕາມ, ກວດກາ ການປະຕິບັດໜ້າທີ່ ຂອງລັດຖະມົນຕີ, ປະທານ ຫຼື ຫົວໜ້າອົງການ, ຫົວໜ້າອົງການລັດທຽບເທົ່າກະຊວງ, ເຈົ້າແຂວງ, ເຈົ້າຄອງນະຄອນຫຼວງ, ຮອງລັດຖະມົນຕີ, ຮອງປະທານ ຫຼື ຮອງຫົວໜ້າອົງການ, ຮອງຫົວໜ້າອົງການລັດທຽບເທົ່າກະຊວງ, ຮອງເຈົ້າແຂວງ, ຮອງເຈົ້າຄອງນະຄອນຫຼວງ, ພະນັກງານ-ລັດຖະກອນ, ທະຫານ, ຕໍາຫຼວດ, ພະນັກງານວິສາຫະກິດຂອງລັດ ທີ່ຂຶ້ນກັບຂັ້ນສູນກາງຄຸ້ມຄອງ ແລະ ຜູ້ໄດ້ຮັບມອບສິດຈາກທາງການ;
9. ສະເໜີໃຫ້ອົງການທີ່ກ່ຽວຂ້ອງ ປະຕິບັດມາດຕະການ ຕໍ່ຜູ້ກະທໍາຜິດ ຕາມກົດໝາຍ;
10. ຕິດຕາມ, ກວດກາ ວຽກງານທີ່ພົວພັນເຖິງຄວາມຮັບຜິດຊອບຄຸ້ມຄອງ ຂອງຫຼາຍກະຊວງ, ອົງການ, ອົງການລັດທຽບເທົ່າກະຊວງ, ແຂວງ, ນະຄອນຫຼວງ;
11. ຄົ້ນຄວ້າ, ພິຈາລະນາຄໍາສະເໜີຂອງພົນລະເມືອງ ຕາມທີ່ໄດ້ກໍານົດໄວ້ໃນກົດໝາຍວ່າດ້ວຍການແກ້ໄຂຄໍາຮ້ອງທຸກ;
12. ສະກັດກັ້ນ, ຕ້ານການສໍ້ລາດບັງຫຼວງ ແລະ ດໍາເນີນການສືບສວນ-ສອບສວນ ຕາມທີ່ໄດ້ກໍານົດໄວ້ໃນກົດໝາຍ;
13. ກວດກາຜົນຂອງການກວດສອບຕາມມະຕິຂອງກອງປະຊຸມສະພາແຫ່ງຊາດ;
14. ພົວພັນ ແລະ ປະສານສົມທົບກັບ ບັນດາອົງການຈັດຕັ້ງຂອງລັດຂັ້ນສູນກາງ ແລະ ທ້ອງຖິ່ນ, ອົງການທີ່ຮັບຜິດຊອບ ກ່ຽວກັບການກວດສອບແຫ່ງລັດ ແລະ ກວດສອບເອກະລາດ ກ່ຽວກັບການດໍາເນີນການກວດກາ, ການແກ້ໄຂ ແລະ ການປະຕິບັດຜົນຂອງການກວດກາ ຕາມພາລະບົດບາດຂອງຕົນ;
15. ສະເໜີມາດຕະການ, ວິທີການແກ້ໄຂຜົນຂອງການກວດກາລັດ ໃຫ້ອົງການຈັດຕັ້ງທີ່ກ່ຽວຂ້ອງເພື່ອພິຈາລະນາຕົກລົງ ແລະ ລາຍງານໃຫ້ລັດຖະບານ;

16. ຕິດຕາມ, ກວດກາ ການຈັດຕັ້ງປະຕິບັດຜົນຂອງການກວດກາ ຂອງຂັ້ນແຂວງ, ຂັ້ນກະຊວງ;

17. ພົວພັນຮ່ວມມືກັບຕ່າງປະເທດ, ພາກພື້ນ ແລະ ສາກົນ ກ່ຽວກັບວຽກງານກວດກາລັດ ຕາມການຕົກລົງຂອງລັດຖະບານ;

18. ສະຫຼຸບ, ລາຍງານ ການເຄື່ອນໄຫວວຽກງານກວດກາລັດ ແລະ ຜົນຂອງການກວດກາ ໃນຂອບເຂດການຄຸ້ມຄອງຂອງລັດຖະບານ ໃຫ້ນາຍົກລັດຖະມົນຕີ ແລະ ຄະນະປະຈຳສະພາແຫ່ງຊາດ ຢ່າງເປັນປົກກະຕິ;

19. ນຳໃຊ້ສິດ ແລະ ປະຕິບັດໜ້າທີ່ອື່ນ ຕາມທີ່ໄດ້ກຳນົດໄວ້ໃນກົດໝາຍ.

**ມາດຕາ 32 (ປັບປຸງ) ໂຄງປະກອບ ການຈັດຕັ້ງ ແລະ ບຸກຄະລາກອນ ຂອງອົງການກວດກາລັດຖະບານ**

ໂຄງປະກອບການຈັດຕັ້ງ ຂອງອົງການກວດກາລັດຖະບານ ມີ ຫ້ອງການ, ກົມ ແລະ ພະແນກ.

ໂຄງປະກອບບຸກຄະລາກອນ ຂອງອົງການກວດກາລັດຖະບານ ມີ ປະທານ, ຮອງປະທານ, ຫົວໜ້າ ແລະ ຮອງຫົວໜ້າຂັ້ນກົມ, ຫົວໜ້າ ແລະ ຮອງຫົວໜ້າພະແນກ, ລັດຖະກອນວິຊາການ.

**ມາດຕາ 33 (ປັບປຸງ) ປະທານອົງການກວດກາລັດຖະບານ**

ປະທານອົງການກວດກາລັດຖະບານ ຖືກແຕ່ງຕັ້ງ ຫຼື ປົດຕຳແໜ່ງ ຕາມວິທີການດຽວກັນກັບສະມາຊິກລັດຖະບານ, ມີຄວາມຮັບຜິດຊອບ ຕໍ່ນາຍົກລັດຖະມົນຕີ ແລະ ມີໜ້າທີ່ລາຍງານ ຕໍ່ຄະນະປະຈຳສະພາແຫ່ງຊາດ ຫຼື ກອງປະຊຸມສະພາແຫ່ງຊາດ ກ່ຽວກັບການຕິດຕາມ, ກວດກາລັດ, ການສະກັດກັ້ນ ແລະ ຕ້ານການສໍ້ລາດບັງຫຼວງ.

ປະທານອົງການກວດກາລັດຖະບານ ມີ ສິດ ແລະ ໜ້າທີ່ ດັ່ງນີ້:

1. ຊີ້ນຳ-ນຳພາ ແລະ ກວດກາ ການຈັດຕັ້ງປະຕິບັດ ວຽກງານກວດກາລັດ ໃນຂອບເຂດທົ່ວປະເທດ;

2. ຜັນຂະຫຍາຍ ມະຕິກອງປະຊຸມລັດຖະບານ, ມະຕິກອງປະຊຸມວຽກງານກວດກາທົ່ວປະເທດ ເປັນແຜນການ, ແຜນງານ, ໂຄງການຂອງຕົນ ແລະ ຈັດຕັ້ງປະຕິບັດ;

3. ອອກຄຳສັ່ງ, ຂໍ້ຕົກລົງ, ຄຳແນະນຳ ແລະ ແຈ້ງການ ກ່ຽວກັບວຽກງານກວດກາລັດ ເພື່ອເພີ່ມປະສິດທິພາບໃນການຈັດຕັ້ງ ແລະ ການເຄື່ອນໄຫວກວດກາລັດ ແຕ່ສູນກາງລົງຮອດທ້ອງຖິ່ນ;

4. ງົດການປະຕິບັດ, ລົບລ້າງ ຫຼື ຍົກເລີກ ຄຳສັ່ງ, ຂໍ້ຕົກລົງ, ຄຳແນະນຳ, ແຈ້ງການ ຫຼື ນິຕິກຳອື່ນ ຂອງອົງການກວດກາລັດຂັ້ນລຸ່ມ ທີ່ຂັດກັບກົດໝາຍ ແລະ ລະບຽບການ ຫຼື ຂັດກັບນິຕິກຳ ຂອງອົງການກວດກາລັດຂັ້ນເທິງ;

5. ປະສານສົມທົບກັບ ຫົວໜ້າອົງການໄອຍະການປະຊາຊົນສູງສຸດ ເພື່ອສະເໜີຕໍ່ລັດຖະມົນຕີ, ຫົວໜ້າອົງການທຽບເທົ່າກະຊວງ ແລະ ເຈົ້າແຂວງ, ເຈົ້າຄອງນະຄອນຫຼວງ ງົດການຈັດຕັ້ງປະຕິບັດ, ລົບລ້າງ ຫຼື ຍົກເລີກ ນິຕິກຳຂອງຫົວໜ້າອົງການດັ່ງກ່າວ ທີ່ຂັດກັບລັດຖະທຳມະນູນ, ກົດໝາຍ. ໃນກໍລະນີ ທີ່ບໍ່ປະຕິບັດຕາມການສະເໜີນັ້ນ ແມ່ນມີສິດສະເໜີຕໍ່ນາຍົກລັດຖະມົນຕີ ເພື່ອພິຈາລະນາຕົກລົງ;

6. ຕົກລົງດຳເນີນການກວດກາລັດ ຕາມພາລະບົດບາດ, ສິດ ແລະ ໜ້າທີ່ ຂອງຕົນ. ໃນກໍລະນີທີ່ເກີນສິດ ແລະ ໜ້າທີ່ຂອງຕົນ ຕ້ອງສະເໜີຕໍ່ນາຍົກລັດຖະມົນຕີ ເພື່ອພິຈາລະນາຕົກລົງ;

7. ອອກຄຳສັ່ງເປີດ ຫຼື ບໍ່ເປີດ ການສືບສວນ-ສອບສວນ;

8. ສະເໜີໃຫ້ລັດຖະມົນຕີ, ຫົວໜ້າອົງການ, ຫົວໜ້າອົງການລັດທຽບເທົ່າກະຊວງ, ເຈົ້າແຂວງ, ເຈົ້າຄອງນະຄອນຫຼວງ ດໍາເນີນການກວດກາ ໃນຂອບເຂດການຄຸ້ມຄອງຂອງ ຂັ້ນກະຊວງ, ຂັ້ນແຂວງ;

9. ສະເໜີໃຫ້ນາຍົກລັດຖະມົນຕີ ພິຈາລະນາຕົກລົງແກ້ໄຂຜົນຂອງການກວດກາ ໃນຂອບເຂດການຄຸ້ມຄອງ ຂອງລັດຖະບານ;

10. ສະເໜີໃຫ້ອົງການທີ່ກ່ຽວຂ້ອງ ພິຈາລະນາຄືນ ບັນຫາທີ່ບໍ່ເອກະພາບ ລະຫວ່າງ ຫົວໜ້າກົມກວດກາຂັ້ນກະຊວງ ກັບ ລັດຖະມົນຕີ, ຫົວໜ້າອົງການ, ຫົວໜ້າອົງການລັດທຽບເທົ່າກະຊວງ; ປະທານອົງການກວດກາລັດຂັ້ນແຂວງ ກັບເຈົ້າແຂວງ, ເຈົ້າຄອງນະຄອນຫຼວງ ກ່ຽວກັບວຽກງານກວດກາລັດ. ໃນກໍລະນີ ທີ່ບໍ່ພິຈາລະນາຄືນ ຫຼື ພິຈາລະນາແລ້ວ ແຕ່ຍັງບໍ່ທັນເໝາະສົມ ມີສິດລາຍງານຕໍ່ນາຍົກລັດຖະມົນຕີ ເພື່ອພິຈາລະນາຕົກລົງ;

11. ສະເໜີແຕ່ງຕັ້ງ, ຍົກຍ້າຍ ຫຼື ປົດຕໍາແໜ່ງ ຮອງປະທານ, ຫົວໜ້າຫ້ອງການ ແລະ ຫົວໜ້າກົມຂອງອົງການກວດກາລັດຖະບານ ເພື່ອໃຫ້ນາຍົກລັດຖະມົນຕີ ພິຈາລະນາຕົກລົງ;

12. ແຕ່ງຕັ້ງ, ຍົກຍ້າຍ ຫຼື ປົດຕໍາແໜ່ງ ຮອງຫົວໜ້າຫ້ອງການ, ຮອງຫົວໜ້າກົມ, ຫົວໜ້າ ແລະ ຮອງຫົວໜ້າພະແນກ ຂອງອົງການກວດກາລັດຖະບານ;

13. ນໍາໃຊ້ສິດ ແລະ ປະຕິບັດໜ້າທີ່ອື່ນ ຕາມທີ່ໄດ້ກໍານົດໄວ້ໃນກົດໝາຍ.

**ມາດຕາ 34 ຮອງປະທານອົງການກວດກາລັດຖະບານ**

ຮອງປະທານອົງການກວດກາລັດຖະບານ ຖືກແຕ່ງຕັ້ງ, ຍົກຍ້າຍ ຫຼື ປົດຕໍາແໜ່ງ ໂດຍນາຍົກລັດຖະມົນຕີ ຕາມການສະເໜີຂອງປະທານອົງການກວດກາລັດຖະບານ.

ຮອງປະທານອົງການກວດກາລັດຖະບານ ມີ ສິດ ແລະ ໜ້າທີ່ ຊ່ວຍວຽກປະທານອົງການກວດກາລັດຖະບານ ແລະ ຮັບຜິດຊອບວຽກງານໃດໜຶ່ງ ຕາມການມອບໝາຍຂອງປະທານ. ໃນກໍລະນີ ທີ່ປະທານບໍ່ຢູ່ ຫຼື ບໍ່ສາມາດປະຕິບັດໜ້າທີ່ໄດ້ນັ້ນ ແມ່ນຮອງປະທານຜູ້ທີ່ໄດ້ຮັບມອບໝາຍຈາກປະທານ ເປັນຜູ້ຮັກສາການແທນ.

**ມາດຕາ 35 (ປັບປຸງ) ທີ່ຕັ້ງ ແລະ ພາລະບົດບາດ ຂອງອົງການກວດກາລັດຂັ້ນແຂວງ**

ອົງການກວດກາລັດຂັ້ນແຂວງ ເປັນອົງການລັດທຽບເທົ່າພະແນກການຂັ້ນແຂວງ ແລະ ຢູ່ໃນໂຄງປະກອບກົງຈັກ ຂອງອົງການປົກຄອງຂັ້ນແຂວງ, ມີພາລະບົດບາດເປັນເສນາທິການໃຫ້ ເຈົ້າແຂວງ, ເຈົ້າຄອງນະຄອນຫຼວງ ກ່ຽວກັບການກວດກາລັດ, ການສະກັດກັ້ນ ແລະ ຕ້ານການສໍ້ລາດບັງຫຼວງ, ການຄົ້ນຄວ້າ, ພິຈາລະນາຄໍາສະເໜີຂອງພົນລະເມືອງ ທີ່ຂຶ້ນກັບການຄຸ້ມຄອງ ຂອງອົງການປົກຄອງຂັ້ນແຂວງ ແລະ ຊີ້ນໍາອົງການກວດກາລັດຂັ້ນເມືອງ ແລະ ຂະແໜງກວດກາລັດ ຂອງພະແນກການຂັ້ນແຂວງ;

ອົງການກວດກາລັດຂັ້ນແຂວງ ເຄື່ອນໄຫວວຽກງານ ພາຍໃຕ້ການຊີ້ນໍາດ້ານວິຊາສະເພາະຂອງອົງການກວດກາລັດຖະບານ.

**ມາດຕາ 36 (ປັບປຸງ) ສິດ ແລະ ໜ້າທີ່ ຂອງອົງການກວດກາລັດຂັ້ນແຂວງ**

ອົງການກວດກາລັດຂັ້ນແຂວງ ມີ ສິດ ແລະ ໜ້າທີ່ ດັ່ງນີ້:

1. ຄົ້ນຄວ້າ ຜັນຂະຫຍາຍແຜນຍຸດທະສາດ, ແຜນການ, ຂໍ້ຕົກລົງ, ຄໍາສັ່ງ ຂອງອົງການກວດກາລັດຖະບານ, ອົງການປົກຄອງຂັ້ນແຂວງ ເປັນແຜນການ, ແຜນງານ ແລະ ໂຄງການລະອຽດຂອງຕົນ ແລ້ວຈັດຕັ້ງປະຕິບັດ;

2. ໂຄສະນາ, ເຜີຍແຜ່ ນະໂຍບາຍ, ກົດໝາຍ ແລະ ລະບຽບການ ກ່ຽວກັບວຽກງານກວດກາລັດ;

3. ຕິດຕາມ, ກວດກາ ການປະຕິບັດ ນະໂຍບາຍ, ກົດໝາຍ, ລະບຽບການ, ແຜນການ, ສິດ, ໜ້າທີ່ ແລະ ຄວາມຮັບຜິດຊອບຂອງຂະແໜງການຂັ້ນແຂວງ, ຂັ້ນເມືອງ ແລະ ອົງການຈັດຕັ້ງອື່ນຂອງລັດທີ່ກ່ຽວຂ້ອງ;

4. ຕິດຕາມ, ກວດກາ ການປະຕິບັດໜ້າທີ່ ຂອງຫົວໜ້າພະແນກ, ປະທານ ຫຼື ຫົວໜ້າອົງການລັດທຽບເທົ່າພະແນກຂັ້ນແຂວງ, ເຈົ້າເມືອງ, ຫົວໜ້າເທດສະບານ, ເຈົ້ານະຄອນ, ຮອງຫົວໜ້າພະແນກ, ຮອງປະທານ ຫຼື ຮອງຫົວໜ້າອົງການລັດທຽບເທົ່າພະແນກຂັ້ນແຂວງ, ຮອງເຈົ້າເມືອງ, ຮອງຫົວໜ້າເທດສະບານ, ຮອງເຈົ້ານະຄອນ, ພະນັກງານ-ລັດຖະກອນ, ທະຫານ, ຕຳຫຼວດ ແລະ ພະນັກງານວິສາຫະກິດຂອງລັດຂັ້ນແຂວງ ຄຸ້ມຄອງ;

5. ຊີ້ນຳ, ຕິດຕາມ, ກວດກາ ການຈັດຕັ້ງປະຕິບັດວຽກງານກວດກາລັດ ຂອງຂັ້ນລຸ່ມ;

6. ບຳລຸງ, ຍົກລະດັບ ວຽກງານກວດກາ ໃຫ້ຖັນແຖວພະນັກງານ-ລັດຖະກອນ ທີ່ເຮັດວຽກງານກວດກາລັດ;

7. ສະເໜີໃຫ້ອົງການທີ່ກ່ຽວຂ້ອງ ປະຕິບັດມາດຕະການ ຕໍ່ຜູ້ກະທຳຜິດ ຕາມກົດໝາຍ;

8. ຕິດຕາມ, ກວດກາ ວຽກງານທີ່ພົວພັນເຖິງຄວາມຮັບຜິດຊອບຄຸ້ມຄອງ ຂອງຫຼາຍພະແນກການ, ຫຼາຍເມືອງ, ເທດສະບານ, ນະຄອນ ທີ່ຂຶ້ນກັບອົງການປົກຄອງຂັ້ນແຂວງ;

9. ຄົ້ນຄວ້າ, ພິຈາລະນາຄຳສະເໜີຂອງພົນລະເມືອງ ຕາມທີ່ໄດ້ກຳນົດໄວ້ໃນກົດໝາຍວ່າດ້ວຍການແກ້ໄຂຄຳຮ້ອງທຸກ;

10. ສະກັດກັ້ນ, ຕ້ານການສໍ້ລາດບັງຫຼວງ ແລະ ດຳເນີນການສືບສວນ-ສອບສວນ ຕາມທີ່ໄດ້ກຳນົດໄວ້ໃນກົດໝາຍ;

11. ກວດກາຕາມຜົນຂອງການກວດສອບ ຕາມມະຕິຂອງກອງປະຊຸມສະພາປະຊາຊົນຂັ້ນແຂວງ;

12. ຕິດຕາມ, ກວດກາ ການຈັດຕັ້ງປະຕິບັດຜົນການກວດກາ ຂອງພະແນກຂັ້ນແຂວງ;

13. ພົວພັນ ແລະ ປະສານສົມທົບ ກັບບັນດາອົງການຈັດຕັ້ງຂອງລັດຂັ້ນແຂວງ, ຂັ້ນເມືອງ, ອົງການທີ່ຮັບຜິດຊອບ ການກວດສອບແຫ່ງລັດ ແລະ ກວດສອບເອກະລາດ ກ່ຽວກັບການດຳເນີນການກວດກາ, ການແກ້ໄຂ ແລະ ການປະຕິບັດຜົນຂອງການກວດກາ ຕາມພາລະບົດບາດຂອງຕົນ;

14. ສະເໜີມາດຕະການ, ວິທີການແກ້ໄຂຜົນຂອງການກວດກາລັດ ໃຫ້ຜູ້ຕົກລົງກວດກາ ເພື່ອພິຈາລະນາຕົກລົງ ແລະ ລາຍງານໃຫ້ຂັ້ນເທິງຕາມລະບົບອົງການປົກຄອງ ຫຼື ຂະແໜງການ ແລະ ອົງການກວດກາລັດຂັ້ນເທິງຖັດຕົນ;

15. ພົວພັນຮ່ວມມືກັບຕ່າງປະເທດ ກ່ຽວກັບວຽກງານກວດກາລັດ ຕາມການຕົກລົງ ຂອງຂັ້ນເທິງ;

16. ສະຫຼຸບ, ລາຍງານການເຄື່ອນໄຫວວຽກງານກວດກາລັດ ແລະ ຜົນຂອງການກວດກາ ໃນຂອບເຂດການຄຸ້ມຄອງຂອງຂັ້ນແຂວງ ໃຫ້ເຈົ້າແຂວງ, ເຈົ້າຄອງນະຄອນຫຼວງ, ປະທານອົງການກວດກາລັດຖະບານ ແລະ ຄະນະປະຈຳສະພາປະຊາຊົນຂັ້ນແຂວງ ຢ່າງເປັນປົກກະຕິ;

17. ນຳໃຊ້ສິດ ແລະ ປະຕິບັດໜ້າທີ່ອື່ນ ຕາມທີ່ໄດ້ກຳນົດໄວ້ໃນກົດໝາຍ.

**ມາດຕາ 37 (ປັບປຸງ) ໂຄງປະກອບການຈັດຕັ້ງ ແລະ ບຸກຄະລາກອນ ຂອງອົງການກວດກາລັດຂັ້ນແຂວງ**

ໂຄງປະກອບການຈັດຕັ້ງ ຂອງອົງການກວດກາລັດຂັ້ນແຂວງ ມີຫ້ອງການ ແລະ ຂະແໜງການກວດກາ.

ໂຄງປະກອບບຸກຄະລາກອນ ຂອງອົງການກວດກາລັດຂັ້ນແຂວງ ມີ ປະທານ ແລະ ຮອງປະທານ, ຫົວໜ້າ ແລະ ຮອງຫົວໜ້າຂັ້ນຂະແໜງ, ລັດຖະກອນວິຊາການ.

**ມາດຕາ 38 (ປັບປຸງ) ປະທານອົງການກວດກາລັດຂັ້ນແຂວງ**

ປະທານອົງການກວດກາລັດຂັ້ນແຂວງ ຖືກແຕ່ງຕັ້ງ, ຍົກຍ້າຍ ຫຼື ປົດຕຳແໜ່ງ ໂດຍເຈົ້າແຂວງ, ເຈົ້າຄອງນະຄອນຫຼວງ ພາຍຫຼັງສະພາປະຊາຊົນຂັ້ນແຂວງ ຮັບຮອງເອົາ ຕາມການສະເໜີຂອງເຈົ້າແຂວງ, ເຈົ້າຄອງນະຄອນຫຼວງ ບົນພື້ນຖານການເຫັນດີເປັນເອກະພາບກັບປະທານອົງການກວດກາລັດຖະບານ; ມີຄວາມຮັບຜິດຊອບຕໍ່ເຈົ້າແຂວງ, ເຈົ້າຄອງນະຄອນຫຼວງ ແລະ ມີໜ້າທີ່ລາຍງານ ຕໍ່ປະທານອົງການກວດກາລັດຖະບານ, ຄະນະປະຈຳສະພາປະຊາຊົນ ຫຼື ກອງປະຊຸມສະພາປະຊາຊົນ ຂັ້ນແຂວງ ກ່ຽວກັບວຽກງານກວດກາລັດ, ສະກັດກັ້ນ ແລະ ຕ້ານການສໍ້ລາດບັງຫຼວງ.

ປະທານອົງການກວດກາລັດຂັ້ນແຂວງ ມີ ສິດ ແລະ ໜ້າທີ່ ດັ່ງນີ້:

1. ຊີ້ນຳ-ນຳພາ ແລະ ກວດກາ ການຈັດຕັ້ງປະຕິບັດ ວຽກງານກວດກາລັດ ໃນຂອບເຂດຂັ້ນແຂວງ;
2. ຜັນຂະຫຍາຍ ມະຕິກອງປະຊຸມຂອງອົງການປົກຄອງຂັ້ນແຂວງ, ມະຕິກອງປະຊຸມວຽກງານກວດກາທົ່ວປະເທດ ເປັນແຜນການ, ແຜນງານ, ໂຄງການຂອງຕົນ ແລະ ຈັດຕັ້ງປະຕິບັດ;
3. ອອກຄຳສັ່ງ, ຂໍ້ຕົກລົງ, ຄຳແນະນຳ ແລະ ແຈ້ງການ ກ່ຽວກັບວຽກງານກວດກາລັດ ຢູ່ຂັ້ນເມືອງ, ພະແນກການຂັ້ນແຂວງ;
4. ງົດການປະຕິບັດ, ລົບລ້າງ ຫຼື ຍົກເລີກຄຳສັ່ງ, ຂໍ້ຕົກລົງ, ຄຳແນະນຳ, ແຈ້ງການ ຫຼື ນິຕິກຳອື່ນ ຂອງອົງການກວດກາລັດຂັ້ນລຸ່ມ ທີ່ຂັດກັບກົດໝາຍ ຫຼື ນິຕິກຳອື່ນ ຂອງອົງການກວດກາລັດຂັ້ນເທິງ;
5. ປະສານສົມທົບກັບ ຫົວໜ້າອົງການໄອຍະການປະຊາຊົນຂັ້ນແຂວງ ເພື່ອສະເໜີ ຕໍ່ຫົວໜ້າພະແນກຂັ້ນແຂວງ, ເຈົ້າເມືອງ, ຫົວໜ້າເທດສະບານ, ເຈົ້ານະຄອນ ງົດການຈັດຕັ້ງປະຕິບັດ, ລົບລ້າງ ຫຼື ຍົກເລີກນິຕິກຳຂອງຫົວໜ້າອົງການດັ່ງກ່າວ ທີ່ຂັດກັບລັດຖະທຳມະນູນ, ກົດໝາຍ. ໃນກໍລະນີທີ່ບໍ່ປະຕິບັດຕາມການສະເໜີນັ້ນ ແມ່ນມີສິດສະເໜີຕໍ່ເຈົ້າແຂວງ, ເຈົ້າຄອງນະຄອນຫຼວງ ເພື່ອພິຈາລະນາ ແລະ ລາຍງານໃຫ້ປະທານອົງການກວດກາລັດຖະບານ ເພື່ອຊີ້ນຳ;
6. ຕົກລົງດຳເນີນການກວດກາລັດ ຕາມພາລະບົດບາດ, ສິດ ແລະ ໜ້າທີ່ ຂອງຕົນ. ໃນກໍລະນີ ທີ່ເກີນສິດ ແລະ ໜ້າທີ່ຂອງຕົນ ຕ້ອງສະເໜີເຈົ້າແຂວງ, ເຈົ້າຄອງນະຄອນຫຼວງ ເພື່ອພິຈາລະນາຕົກລົງ;
7. ອອກຄຳສັ່ງເປີດ ຫຼື ບໍ່ເປີດ ການສືບສວນ-ສອບສວນ ຕາມຂອບເຂດຄວາມຮັບຜິດຊອບຂອງຕົນ;
8. ສະເໜີໃຫ້ຫົວໜ້າພະແນກຂັ້ນແຂວງ, ເຈົ້າເມືອງ, ຫົວໜ້າເທດສະບານ, ເຈົ້ານະຄອນ ດຳເນີນການກວດກາ ໃນຂອບເຂດການຄຸ້ມຄອງຂອງຕົນ;
9. ສະເໜີໃຫ້ເຈົ້າແຂວງ, ເຈົ້າຄອງນະຄອນຫຼວງ ພິຈາລະນາຕົກລົງ ແກ້ໄຂຜົນຂອງການກວດກາໃນຂອບເຂດການຄຸ້ມຄອງຂອງຕົນ. ໃນກໍລະນີ ທີ່ບໍ່ພິຈາລະນາ ຫຼື ໄດ້ພິຈາລະນາແລ້ວ ແຕ່ເຫັນວ່າ ຍັງບໍ່ເໝາະສົມ ມີສິດລາຍງານຕໍ່ປະທານອົງການກວດກາລັດຖະບານ ເພື່ອພິຈາລະນາຕົກລົງ;
10. ສະເໜີໃຫ້ອົງການທີ່ກ່ຽວຂ້ອງ ພິຈາລະນາຄືນ ບັນຫາທີ່ບໍ່ເອກະພາບ ລະຫວ່າງຫົວໜ້າຂະແໜງກວດກາລັດ ກັບຫົວໜ້າພະແນກຂັ້ນແຂວງ, ປະທານອົງການກວດກາລັດຂັ້ນເມືອງ ກັບເຈົ້າເມືອງ, ຫົວໜ້າ

ເຫດສະບານ, ເຈົ້ານະຄອນ ກ່ຽວກັບວຽກງານກວດກາລັດ. ໃນກໍລະນີ ທີ່ບໍ່ພິຈາລະນາຄືນ ຫຼື ພິຈາລະນາແລ້ວແຕ່ຍັງບໍ່ທັນເໝາະສົມ ມີສິດລາຍງານຕໍ່ເຈົ້າແຂວງ, ເຈົ້າຄອງນະຄອນຫຼວງ ເພື່ອພິຈາລະນາຕົກລົງ;

11. ນຳໃຊ້ສິດ ແລະ ປະຕິບັດໜ້າທີ່ອື່ນ ຕາມທີ່ໄດ້ກຳນົດໄວ້ໃນກົດໝາຍ.

**ມາດຕາ 39 (ປັບປຸງ) ຮອງປະທານອົງການກວດກາລັດຂັ້ນແຂວງ**

ຮອງປະທານອົງການກວດກາລັດຂັ້ນແຂວງ ຖືກແຕ່ງຕັ້ງ, ຍົກຍ້າຍ ຫຼື ປົດຕຳແໜ່ງໂດຍ ເຈົ້າແຂວງ, ເຈົ້າຄອງນະຄອນຫຼວງ ຕາມການສະເໜີ ຂອງຄະນະຈັດຕັ້ງຂັ້ນແຂວງ ບົນພື້ນຖານການເຫັນດີເປັນເອກະພາບກັບປະທານອົງການກວດກາລັດຂັ້ນແຂວງ.

ຮອງປະທານອົງການກວດກາລັດຂັ້ນແຂວງ ມີສິດ ແລະ ໜ້າທີ່ ຊ່ວຍວຽກປະທານອົງການກວດກາລັດຂັ້ນແຂວງ ແລະ ຮັບຜິດຊອບວຽກງານໃດໜຶ່ງ ຕາມການມອບໝາຍຂອງປະທານ. ໃນກໍລະນີ ທີ່ປະທານບໍ່ຢູ່ ຫຼື ບໍ່ສາມາດປະຕິບັດໜ້າທີ່ໄດ້ນັ້ນ ແມ່ນຮອງປະທານ ຜູ້ທີ່ໄດ້ຮັບມອບໝາຍຈາກປະທານເປັນຜູ້ຮັກສາການແທນ.

**ມາດຕາ 40 (ປັບປຸງ) ທີ່ຕັ້ງ ແລະ ພາລະບົດບາດຂອງອົງການກວດກາລັດຂັ້ນເມືອງ**

ອົງການກວດກາລັດຂັ້ນເມືອງ ເປັນອົງການລັດທຽບເທົ່າຫ້ອງການ ແລະ ຢູ່ໃນໂຄງປະກອບກົງຈັກຂອງອົງການປົກຄອງຂັ້ນເມືອງ, ມີພາລະບົດບາດເປັນເສນາທິການໃຫ້ເຈົ້າເມືອງ, ຫົວໜ້າເທດສະບານ, ເຈົ້ານະຄອນ ກ່ຽວກັບການກວດກາລັດ, ສະກັດກັ້ນ ແລະ ຕ້ານການສໍ້ລາດບັງຫຼວງ, ຄົ້ນຄວ້າ, ພິຈາລະນາຄຳສະເໜີຂອງພົນລະເມືອງ ໃນຂອບເຂດສິດ ແລະ ໜ້າທີ່ ຂອງອົງການປົກຄອງຂັ້ນເມືອງ.

ອົງການກວດກາລັດຂັ້ນເມືອງ ເຄື່ອນໄຫວວຽກງານພາຍໃຕ້ການຊີ້ນຳດ້ານວິຊາສະເພາະ ຂອງອົງການກວດກາລັດຂັ້ນແຂວງ.

**ມາດຕາ 41 (ປັບປຸງ) ສິດ ແລະ ໜ້າທີ່ ຂອງອົງການກວດກາລັດຂັ້ນເມືອງ**

ອົງການກວດກາລັດຂັ້ນເມືອງ ມີ ສິດ ແລະ ໜ້າທີ່ ດັ່ງນີ້:

1. ຈັດຕັ້ງປະຕິບັດນະໂຍບາຍ, ກົດໝາຍ ແລະ ລະບຽບການ, ແຜນການ, ມະຕິ, ຄຳສັ່ງ ຂອງອົງການກວດກາລັດ ຂັ້ນເທິງ ກ່ຽວກັບວຽກງານກວດກາລັດ;
2. ໂຄສະນາ, ເຜີຍແຜ່ ນະໂຍບາຍ, ກົດໝາຍ ແລະ ລະບຽບການ ກ່ຽວກັບວຽກງານກວດກາລັດ;
3. ຕິດຕາມ, ກວດກາ ການປະຕິບັດນະໂຍບາຍ, ກົດໝາຍ ແລະ ລະບຽບການ, ແຜນການ, ສິດ, ໜ້າທີ່ ແລະ ຄວາມຮັບຜິດຊອບ ຂອງຫ້ອງການຂັ້ນເມືອງ, ບ້ານ ແລະ ການຈັດຕັ້ງອື່ນຂອງລັດທີ່ກ່ຽວຂ້ອງ;
4. ຕິດຕາມ, ກວດກາ ການປະຕິບັດໜ້າທີ່ ຂອງຫົວໜ້າຫ້ອງການ, ປະທານ ຫຼື ຫົວໜ້າອົງການລັດທຽບເທົ່າຫ້ອງການຂັ້ນເມືອງ, ຮອງຫົວໜ້າຫ້ອງການ, ຮອງປະທານ ຫຼື ຮອງຫົວໜ້າອົງການລັດທຽບເທົ່າຫ້ອງການຂັ້ນເມືອງ, ພະນັກງານ-ລັດຖະກອນ, ທະຫານ, ຕຳຫຼວດ, ພະນັກງານວິສາຫະກິດຂອງລັດ, ນາຍບ້ານ ແລະ ຮອງນາຍບ້ານ ທີ່ຂຶ້ນກັບການຄຸ້ມຄອງ ຂອງອົງການປົກຄອງຂັ້ນເມືອງ;
5. ສະເໜີໃຫ້ອົງການທີ່ກ່ຽວຂ້ອງ ປະຕິບັດມາດຕະການ ຕໍ່ຜູ້ກະທຳຜິດ ຕາມກົດໝາຍ;
6. ຕິດຕາມ, ກວດກາ ການຈັດຕັ້ງປະຕິບັດຜົນຂອງການກວດກາ ຂອງຫ້ອງການຂັ້ນເມືອງ;
7. ຕິດຕາມ, ກວດກາ ວຽກງານທີ່ພົວພັນເຖິງຄວາມຮັບຜິດຊອບ ຂອງຫຼາຍຫ້ອງການ, ຫຼາຍບ້ານ ທີ່ຂຶ້ນກັບການຄຸ້ມຄອງຂອງອົງການປົກຄອງຂັ້ນເມືອງ;

8. ຄົ້ນຄວ້າ, ພິຈາລະນາ, ຄໍາສະເໜີຂອງພົນລະເມືອງ ຕາມທີ່ໄດ້ກໍານົດໄວ້ໃນກົດໝາຍວ່າດ້ວຍການແກ້ໄຂຄໍາຮ້ອງທຸກ;

9. ສະກັດກັ້ນ, ຕ້ານການສໍ້ລາດບັງຫຼວງ ຕາມທີ່ໄດ້ກໍານົດໄວ້ໃນກົດໝາຍ;

10. ດໍາເນີນການສືບສວນ-ສອບສວນ ຕາມຄໍາສັ່ງຂອງປະທານອົງການກວດກາລັດຂັ້ນແຂວງ;

11. ພົວພັນ ແລະ ປະສານສົມທົບ ກັບບັນດາອົງການຈັດຕັ້ງຂອງລັດຂັ້ນເມືອງ ແລະ ບ້ານ ກ່ຽວກັບການດໍາເນີນການກວດກາ, ການແກ້ໄຂ ແລະ ການປະຕິບັດຜົນຂອງການກວດກາ ຕາມພາລະບົດບາດຂອງຕົນ;

12. ສະເໜີມາດຕະການ, ວິທີການແກ້ໄຂຜົນຂອງການກວດກາ ໃຫ້ຜູ້ຕົກລົງກວດກາ ເພື່ອພິຈາລະນາຕົກລົງ ແລະ ລາຍງານໃຫ້ຂັ້ນເທິງ ຕາມລະບົບອົງການປົກຄອງ ຫຼື ຂະແໜງການ ແລະ ອົງການກວດກາລັດຂັ້ນເທິງຖັດຕົນ;

13. ສະຫຼຸບ, ລາຍງານການເຄື່ອນໄຫວວຽກງານກວດກາ ແລະ ຜົນຂອງການກວດກາ ໃນຂອບເຂດການຄຸ້ມຄອງຂັ້ນເມືອງ ໃຫ້ປະທານອົງການກວດກາລັດຂັ້ນແຂວງ, ເຈົ້າເມືອງ, ຫົວໜ້າເທດສະບານ, ເຈົ້ານະຄອນ ຢ່າງເປັນປົກກະຕິ;

14. ນໍາໃຊ້ສິດ ແລະ ປະຕິບັດໜ້າທີ່ອື່ນ ຕາມທີ່ໄດ້ກໍານົດໄວ້ໃນກົດໝາຍ.

**ມາດຕາ 42 (ປັບປຸງ) ໂຄງປະກອບການຈັດຕັ້ງ ແລະ ບຸກຄະລາກອນ ຂອງອົງການກວດກາລັດຂັ້ນເມືອງ**

ໂຄງປະກອບການຈັດຕັ້ງ ຂອງອົງການກວດກາລັດຂັ້ນເມືອງ ປະກອບມີ ໜ່ວຍງານຈໍານວນໜຶ່ງ.

ໂຄງປະກອບບຸກຄະລາກອນ ຂອງອົງການກວດກາລັດຂັ້ນເມືອງ ມີ ປະທານ ແລະ ຮອງປະທານ, ຫົວໜ້າ ແລະ ຮອງຫົວໜ້າໜ່ວຍງານ, ລັດຖະກອນວິຊາການ.

**ມາດຕາ 43 (ປັບປຸງ) ປະທານອົງການກວດກາລັດຂັ້ນເມືອງ**

ປະທານອົງການກວດກາລັດຂັ້ນເມືອງ ຖືກແຕ່ງຕັ້ງ, ຍົກຍ້າຍ ຫຼື ປົດຕໍາແໜ່ງໂດຍ ເຈົ້າເມືອງ, ຫົວໜ້າເທດສະບານ, ເຈົ້ານະຄອນ ຕາມການສະເໜີຂອງຄະນະຈັດຕັ້ງຂັ້ນເມືອງ ບົນພື້ນຖານການເຫັນດີເປັນເອກະພາບກັບປະທານອົງການກວດກາລັດຂັ້ນແຂວງ, ມີຄວາມຮັບຜິດຊອບ ແລະ ມີໜ້າທີ່ລາຍງານ ຕໍ່ເຈົ້າເມືອງ, ຫົວໜ້າເທດສະບານ, ເຈົ້ານະຄອນ ແລະ ປະທານອົງການກວດກາລັດຂັ້ນແຂວງ ກ່ຽວກັບການຕິດຕາມ, ກວດກາລັດ, ການສະກັດກັ້ນ ແລະ ຕ້ານການສໍ້ລາດບັງຫຼວງ.

ປະທານອົງການກວດກາລັດຂັ້ນເມືອງ ມີ ສິດ ແລະ ໜ້າທີ່ ດັ່ງນີ້:

1. ຈັດຕັ້ງປະຕິບັດກົດໝາຍ, ລະບຽບການ, ແຜນການ, ແຜນງານ, ໂຄງການ ກ່ຽວກັບວຽກງານກວດກາລັດ;

2. ຊີ້ນໍາ, ກວດກາ ການຈັດຕັ້ງປະຕິບັດວຽກງານກວດກາລັດ ຂັ້ນຂອງຕົນ;

3. ອອກຄໍາສັ່ງ, ຂໍ້ຕົກລົງ, ຄໍາແນະນໍາ ແລະ ແຈ້ງການ ກ່ຽວກັບວຽກງານກວດກາລັດ;

4. ປະສານສົມທົບກັບຫົວໜ້າອົງການໄອຍະການປະຊາຊົນເຂດ ເພື່ອສະເໜີ ຕໍ່ຫົວໜ້າຫ້ອງການຂັ້ນເມືອງ ງົດການຈັດຕັ້ງປະຕິບັດ, ລົບລ້າງ ຫຼື ຍົກເລີກນິຕິກໍາ ຂອງຫົວໜ້າຫ້ອງການ ແລະ ບ້ານ ດັ່ງກ່າວທີ່ຂັດກັບກົດໝາຍ. ໃນກໍລະນີ ທີ່ບໍ່ປະຕິບັດຕາມການສະເໜີນັ້ນ ແມ່ນມີສິດສະເໜີຕໍ່ເຈົ້າເມືອງ, ຫົວໜ້າເທດສະບານ, ເຈົ້ານະຄອນ ເພື່ອພິຈາລະນາຕົກລົງ ແລະ ລາຍງານໃຫ້ປະທານອົງການກວດກາລັດຂັ້ນແຂວງ ເພື່ອຂໍຄໍາຊີ້ນໍາ;

5. ຕົກລົງດຳເນີນການກວດກາລັດ ຕາມພາລະບົດບາດ, ສິດ ແລະ ໜ້າທີ່ຂອງຕົນ. ໃນກໍລະນີທີ່ເກີນສິດ ແລະ ໜ້າທີ່ຂອງຕົນ ຕ້ອງສະເໜີເຈົ້າເມືອງ, ຫົວໜ້າເທດສະບານ, ເຈົ້ານະຄອນ ເພື່ອພິຈາລະນາຕົກລົງ;

6. ສະເໜີ ປະທານອົງການກວດກາລັດຂັ້ນແຂວງ ອອກຄຳສັ່ງເປີດການສືບສວນ-ສອບສວນ;

7. ສະເໜີໃຫ້ເຈົ້າເມືອງ, ຫົວໜ້າເທດສະບານ, ເຈົ້ານະຄອນ ພິຈາລະນາຕົກລົງແກ້ໄຂຜົນຂອງການກວດກາ ໃນຂອບເຂດການຄຸ້ມຄອງຂອງຕົນ. ໃນກໍລະນີ ທີ່ບໍ່ພິຈາລະນາ ຫຼື ໄດ້ພິຈາລະນາແລ້ວ ແຕ່ເຫັນວ່າຍັງບໍ່ເໝາະສົມ ມີສິດລາຍງານຕໍ່ ປະທານອົງການກວດກາລັດຂັ້ນແຂວງ ເພື່ອພິຈາລະນາຕົກລົງ;

8. ນຳໃຊ້ສິດ ແລະ ປະຕິບັດໜ້າທີ່ອື່ນ ຕາມທີ່ໄດ້ກຳນົດໄວ້ໃນກົດໝາຍ.

**ມາດຕາ 44 (ປັບປຸງ) ຮອງປະທານອົງການກວດກາລັດຂັ້ນເມືອງ**

ຮອງປະທານອົງການກວດກາລັດຂັ້ນເມືອງ ຖືກແຕ່ງຕັ້ງ, ຍົກຍ້າຍ ຫຼື ປົດຕຳແໜ່ງ ໂດຍເຈົ້າເມືອງ, ຫົວໜ້າເທດສະບານ, ເຈົ້ານະຄອນ ຕາມການສະເໜີຂອງຄະນະຈັດຕັ້ງຂັ້ນເມືອງ ບົນພື້ນຖານການເຫັນດີເປັນເອກະພາບກັບປະທານອົງການກວດກາລັດຂັ້ນເມືອງ.

ຮອງປະທານອົງການກວດກາລັດຂັ້ນເມືອງ ມີສິດ ແລະ ໜ້າທີ່ ຊ່ວຍວຽກປະທານອົງການກວດກາລັດຂັ້ນເມືອງ ແລະ ຮັບຜິດຊອບວຽກງານໃດໜຶ່ງ ຕາມການມອບໝາຍຂອງປະທານ. ໃນກໍລະນີ ທີ່ປະທານບໍ່ຢູ່ ຫຼື ບໍ່ສາມາດປະຕິບັດໜ້າທີ່ໄດ້ນັ້ນ ແມ່ນຮອງປະທານຜູ້ທີ່ໄດ້ຮັບມອບໝາຍ ຈາກປະທານເປັນຜູ້ຮັກສາການແທນ.

## ໝວດທີ 3
## ທີ່ຕັ້ງ, ພາລະບົດບາດ ສິດ ແລະ
## ໜ້າທີ່ ຂອງອົງການກວດກາລັດຕາມຂະແໜງການ

**ມາດຕາ 45 (ປັບປຸງ) ທີ່ຕັ້ງ ແລະ ພາລະບົດບາດ ຂອງກົມກວດກາລັດຂັ້ນກະຊວງ**

ກົມກວດກາລັດຂັ້ນກະຊວງ ແມ່ນ ການຈັດຕັ້ງໜຶ່ງ ທີ່ຂຶ້ນກັບໂຄງປະກອບຂອງຂັ້ນກະຊວງ ມີວິຊາສະເພາະກ່ຽວກັບວຽກງານກວດກາ ຊຶ່ງຂຶ້ນກັບການຄຸ້ມຄອງ ແລະ ຊີ້ນຳຂອງລັດຖະມົນຕີ, ຫົວໜ້າອົງການລັດທຽບເທົ່າກະຊວງ, ມີພາລະບົດບາດໃນການກວດກາຂະແໜງການ ແລະ ການບໍລິຫານ ກ່ຽວກັບການປະຕິບັດນະໂຍບາຍ, ກົດໝາຍ, ລະບຽບການ, ແຜນການ, ວິຊາສະເພາະ, ເຕັກນິກ ຂອງການຈັດຕັ້ງ ແລະ ພະນັກງານ-ລັດຖະກອນ, ທະຫານ, ຕຳຫຼວດ, ພະນັກງານວິສາຫະກິດຂອງລັດ ແລະ ຜູ້ໄດ້ຮັບມອບສິດຈາກທາງການທີ່ຂຶ້ນກັບການຄຸ້ມຄອງຂອງຂັ້ນກະຊວງດັ່ງກ່າວ.

ກົມກວດກາລັດຂັ້ນກະຊວງ, ເຄື່ອນໄຫວວຽກງານພາຍໃຕ້ການຊີ້ນຳດ້ານວິຊາສະເພາະ ຂອງອົງການກວດກາລັດຖະບານ.

**ມາດຕາ 46 (ປັບປຸງ) ສິດ ແລະ ໜ້າທີ່ ຂອງກົມກວດກາລັດຂັ້ນກະຊວງ**

ກົມກວດກາລັດຂັ້ນກະຊວງ ມີ ສິດ ແລະ ໜ້າທີ່ ດັ່ງນີ້:

1. ຜັນຂະຫຍາຍ ມະຕິກອງປະຊຸມວຽກງານກວດກາລັດທົ່ວປະເທດ ເປັນແຜນການ, ແຜນງານ ແລະ ໂຄງການລະອຽດຂອງຕົນ ສະເໜີລັດຖະມົນຕີ, ຫົວໜ້າອົງການ, ຫົວໜ້າອົງການລັດທຽບເທົ່າກະຊວງ ພິຈາລະນາຕົກລົງ ແລະ ຈັດຕັ້ງປະຕິບັດ;

2. ສະເໜີລັດຖະມົນຕີ, ຫົວໜ້າອົງການ, ຫົວໜ້າອົງການລັດທຽບເທົ່າກະຊວງ ອອກຄຳສັ່ງ, ຄຳແນະນຳ, ແຈ້ງການ, ລະບຽບການ ກ່ຽວກັບວຽກງານກວດກາລັດ ຕາມຂະແໜງການ ແລະ ຂະແໜງກວດກາ ຂັ້ນລຸ່ມຂອງຕົນ;

3. ຕິດຕາມ, ກວດກາ ການປະຕິບັດນະໂຍບາຍ, ກົດໝາຍ, ລະບຽບການ, ແຜນການ, ສິດ, ໜ້າທີ່ ແລະ ຄວາມຮັບຜິດຊອບຂອງການຈັດຕັ້ງ;

4. ຕິດຕາມ, ກວດກາ ການປະຕິບັດໜ້າທີ່ ຂອງຫົວໜ້າ ແລະ ຮອງຫົວໜ້າຂັ້ນກົມ, ຫົວໜ້າ ແລະ ຮອງຫົວໜ້າຂັ້ນພະແນກ ແລະ ພະນັກງານ-ລັດຖະກອນ, ທະຫານ, ຕຳຫຼວດ, ພະນັກງານວິສາຫະກິດຂອງລັດ ແລະ ຜູ້ໄດ້ຮັບມອບສິດຈາກທາງການ ທີ່ຂຶ້ນກັບການຄຸ້ມຄອງຂັ້ນກະຊວງ;

5. ຕິດຕາມ, ກວດກາ ວຽກງານທີ່ພົວພັນເຖິງຄວາມຮັບຜິດຊອບຂອງຫຼາຍກົມ, ຫຼາຍຫົວໜ່ວຍທຸລະກິດ ທີ່ຂຶ້ນກັບການຄຸ້ມຄອງຂັ້ນກະຊວງ ແລະ ວຽກງານຂອງຂະແໜງກວດກາລັດ ຂັ້ນພະແນກການຂັ້ນແຂວງ;

6. ສະເໜີໃຫ້ອົງການທີ່ກ່ຽວຂ້ອງ ປະຕິບັດມາດຕະການ ຕໍ່ຜູ້ກະທຳຜິດຕາມກົດໝາຍ;

7. ຄົ້ນຄວ້າ, ພິຈາລະນາຄຳສະເໜີຂອງພົນລະເມືອງ ຕາມທີ່ໄດ້ກຳນົດໄວ້ໃນກົດໝາຍວ່າດ້ວຍການແກ້ໄຂຄຳຮ້ອງທຸກ;

8. ສະກັດກັ້ນ, ຕ້ານການສໍ້ລາດບັງຫຼວງ ຕາມທີ່ໄດ້ກຳນົດໄວ້ໃນກົດໝາຍ;

9. ດຳເນີນການສືບສວນ-ສອບສວນ ຕາມຄຳສັ່ງຂອງປະທານອົງການກວດກາລັດຖະບານ;

10. ສະຫຼຸບ, ລາຍງານ ການເຄື່ອນໄຫວວຽກງານກວດກາ ແລະ ຜົນຂອງການກວດກາ, ການຄົ້ນຄວ້າ, ພິຈາລະນາຄຳສະເໜີຂອງພົນລະເມືອງ ໃນຂອບເຂດການຄຸ້ມຄອງຂອງຂັ້ນກະຊວງ ໃຫ້ລັດຖະມົນຕີ, ຫົວໜ້າອົງການ, ຫົວໜ້າອົງການລັດທຽບເທົ່າກະຊວງ ແລະ ປະທານອົງການກວດກາລັດຖະບານ;

11. ປະສານສົມທົບກັບບັນດາກົມອື່ນພາຍໃນຂັ້ນກະຊວງ ໃນການກຳນົດແຜນການດຳເນີນການກວດກາ, ການແກ້ໄຂ ແລະ ການປະຕິບັດຜົນຂອງການກວດກາ ຕາມພາລະບົດບາດຂອງຕົນ;

12. ສະເໜີ ມາດຕະການ, ວິທີການ ແກ້ໄຂຜົນຂອງການກວດກາລັດ ໃຫ້ອົງການຈັດຕັ້ງທີ່ກ່ຽວຂ້ອງພິຈາລະນາແກ້ໄຂ ແລະ ລາຍງານໃຫ້ຂັ້ນເທິງຂອງຕົນ ເພື່ອຂໍຄຳຊີ້ນຳ;

13. ນຳໃຊ້ສິດ ແລະ ປະຕິບັດໜ້າທີ່ອື່ນ ຕາມທີ່ໄດ້ກຳນົດໄວ້ໃນກົດໝາຍ.

**ມາດຕາ 47 (ປັບປຸງ) ໂຄງປະກອບການຈັດຕັ້ງ ແລະ ບຸກຄະລາກອນ ຂອງກົມກວດກາລັດຂັ້ນກະຊວງ**

ໂຄງປະກອບການຈັດຕັ້ງ ຂອງກົມກວດກາລັດຂັ້ນກະຊວງ ມີ ພະແນກ ຈຳນວນໜຶ່ງ.

ໂຄງປະກອບບຸກຄະລາກອນ ຂອງກົມກວດກາລັດຂັ້ນກະຊວງ ມີ ຫົວໜ້າກົມ ແລະ ຮອງຫົວໜ້າກົມ, ຫົວໜ້າ ແລະ ຮອງຫົວໜ້າພະແນກ, ລັດຖະກອນວິຊາການ.

**ມາດຕາ 48 ຫົວໜ້າກົມກວດກາລັດຂັ້ນກະຊວງ**

ຫົວໜ້າກົມກວດກາລັດຂັ້ນກະຊວງ ຖືກແຕ່ງຕັ້ງ, ຍົກຍ້າຍ ຫຼື ປົດຕຳແໜ່ງ ໂດຍນາຍົກລັດຖະມົນຕີ ຕາມການສະເໜີຂອງ ລັດຖະມົນຕີ, ຫົວໜ້າອົງການ, ຫົວໜ້າອົງການລັດທຽບເທົ່າກະຊວງ ບົນພື້ນຖານການເຫັນດີເປັນເອກະພາບ ກັບປະທານອົງການກວດກາລັດຖະບານ.

ຫົວໜ້າກົມກວດກາລັດຂັ້ນກະຊວງ ມີ ສິດ ແລະ ໜ້າທີ່ ດັ່ງນີ້:

1. ຜັນຂະຫຍາຍ ນະໂຍບາຍ, ແຜນຍຸດທະສາດ, ກົດໝາຍ, ລັດຖະບັນຍັດ, ດຳລັດ, ມະຕິກອງປະຊຸມວຽກງານກວດກາທົ່ວປະເທດ, ມະຕິກອງປະຊຸມຂອງຂັ້ນກະຊວງ ເປັນແຜນການ, ແຜນງານ, ໂຄງການຂອງຕົນ ແລະ ຈັດຕັ້ງປະຕິບັດ;

2. ໂຄສະນາ, ເຜີຍແຜ່ ນະໂຍບາຍ, ກົດໝາຍ ແລະ ລະບຽບການ ກ່ຽວກັບວຽກງານກວດກາ;

3. ຊີ້ນຳວຽກງານກວດກາລັດ ໃນຂອບເຂດການຄຸ້ມຄອງຂັ້ນກະຊວງ ແລະ ກວດກາການປະຕິບັດວຽກງານຂອງຂະແໜງການຕົນ;

4. ອອກຄຳແນະນຳ ແລະ ແຈ້ງການ ກ່ຽວກັບວຽກງານກວດກາລັດ ໃຫ້ຂະແໜງການຂອງຕົນ;

5. ດຳເນີນການກວດກາ ຕາມພາລະບົດບາດ, ສິດ ແລະ ໜ້າທີ່ຂອງຕົນ, ໃນກໍລະນີ ທີ່ເກີນສິດ ແລະ ໜ້າທີ່ຂອງຕົນ ຕ້ອງສະເໜີລັດຖະມົນຕີ, ຫົວໜ້າອົງການ, ຫົວໜ້າອົງການລັດທຽບເທົ່າກະຊວງ ເພື່ອພິຈາລະນາຕົກລົງ;

6. ສະເໜີ ປະທານອົງການກວດກາລັດຖະບານ ອອກຄຳສັ່ງເປີດການສືບສວນ-ສອບສວນ;

7. ສະເໜີຕໍ່ຫົວໜ້າກົມອື່ນ ພາຍໃນຂັ້ນກະຊວງ ຫຼື ພະແນກການສາຍຕັ້ງຂັ້ນລຸ່ມ ຂອງອົງການດັ່ງກ່າວ ງົດການປະຕິບັດ, ລົບລ້າງ ຫຼື ຍົກເລີກ ນິຕິກຳຂອງຕົນ ທີ່ຂັດກັບກົດໝາຍ ແລະ ລະບຽບການ; ໃນກໍລະນີທີ່ບໍ່ປະຕິບັດຕາມການສະເໜີນັ້ນ ກໍມີສິດສະເໜີ ລັດຖະມົນຕີ, ຫົວໜ້າອົງການ, ຫົວໜ້າອົງການລັດທຽບເທົ່າກະຊວງ ພິຈາລະນາແກ້ໄຂ;

8. ສະເໜີສ້າງ ຫຼື ປັບປຸງນິຕິກຳ ກ່ຽວກັບວຽກງານກວດກາລັດ ຕໍ່ລັດຖະມົນຕີ, ຫົວໜ້າອົງການ, ຫົວໜ້າອົງການລັດທຽບເທົ່າກະຊວງ;

9. ແນະນຳໃຫ້ຫົວໜ້າຂະແໜງກວດກາລັດຂັ້ນລຸ່ມ ດຳເນີນການກວດກາລັດ ໃນຂອບເຂດຄວາມຮັບຜິດຊອບຂອງຕົນ;

10. ສະເໜີໃຫ້ລັດຖະມົນຕີ, ຫົວໜ້າອົງການ, ຫົວໜ້າອົງການລັດທຽບເທົ່າກະຊວງ ພິຈາລະນາຕົກລົງແກ້ໄຂຜົນຂອງການກວດກາ, ໃນກໍລະນີ ທີ່ຄຳສະເໜີດັ່ງກ່າວ ບໍ່ໄດ້ຮັບການພິຈາລະນາ ຫຼື ໄດ້ພິຈາລະນາແລ້ວ ແຕ່ເຫັນວ່າຍັງບໍ່ເໝາະສົມ ແມ່ນມີສິດລາຍງານຕໍ່ ປະທານອົງການກວດກາລັດຖະບານ ເພື່ອພິຈາລະນາຕົກລົງ;

11. ນຳໃຊ້ສິດ ແລະ ປະຕິບັດໜ້າທີ່ອື່ນ ຕາມທີ່ໄດ້ກຳນົດໄວ້ໃນກົດໝາຍ.

**ມາດຕາ 49 ຮອງຫົວໜ້າກົມກວດກາລັດ ຂັ້ນກະຊວງ**

ຮອງຫົວໜ້າກົມກວດກາລັດ ຂັ້ນກະຊວງ ຖືກແຕ່ງຕັ້ງ, ຍົກຍ້າຍ ຫຼື ປົດຕຳແໜ່ງ ໂດຍລັດຖະມົນຕີ, ຫົວໜ້າອົງການ, ຫົວໜ້າອົງການລັດທຽບເທົ່າກະຊວງ ຕາມການສະເໜີຂອງກົມຈັດຕັ້ງຂັ້ນກະຊວງ ບົນພື້ນຖານການເຫັນດີເປັນເອກະພາບກັບຫົວໜ້າກົມກວດກາລັດ ຂອງອົງການດັ່ງກ່າວ.

ຮອງຫົວໜ້າກົມກວດກາລັດຂັ້ນກະຊວງ ມີ ສິດ ແລະ ໜ້າທີ່ ຊ່ວຍວຽກຫົວໜ້າກົມ ແລະ ຮັບຜິດຊອບວຽກງານໃດໜຶ່ງ ຕາມການມອບໝາຍຂອງຫົວໜ້າກົມ. ໃນກໍລະນີ ທີ່ຫົວໜ້າບໍ່ຢູ່ ຫຼື ບໍ່ສາມາດປະຕິບັດໜ້າທີ່ໄດ້ນັ້ນ ຮອງຫົວໜ້າຜູ້ທີ່ໄດ້ຮັບມອບໝາຍຈາກຫົວໜ້າກົມ ເປັນຜູ້ຮັກສາການແທນ.

**ມາດຕາ 50 (ປັບປຸງ) ທີ່ຕັ້ງ ແລະ ພາລະບົດບາດ ຂອງຂະແໜງກວດກາລັດ ຂັ້ນພະແນກການ ຂັ້ນແຂວງ**

ຂະແໜງກວດກາລັດ ຂັ້ນພະແນກການຂັ້ນແຂວງ ແມ່ນ ການຈັດຕັ້ງວິຊາສະເພາະ ກ່ຽວກັບວຽກງານກວດກາລັດ ຕາມຂະແໜງການ ຊຶ່ງຂຶ້ນກັບການຄຸ້ມຄອງ ແລະ ຊີ້ນຳ ຂອງຫົວໜ້າພະແນກການດັ່ງກ່າວ, ມີ

ພາລະບົດບາດຊ່ວຍຫົວໜ້າ ຂັ້ນພະແນກການຂັ້ນແຂວງ ໃນການກວດກາຂະແໜງການ ແລະ ການບໍລິຫານ ກ່ຽວກັບການປະຕິບັດນະໂຍບາຍ, ກົດໝາຍ ແລະ ລະບຽບການ, ວິຊາສະເພາະ, ເຕັກນິກຂອງການຈັດຕັ້ງ ແລະ ພະນັກງານ-ລັດຖະກອນ, ທະຫານ, ຕຳຫຼວດ, ພະນັກງານວິສາຫະກິດຂອງລັດ ແລະ ຜູ້ໄດ້ຮັບມອບສິດ ຈາກທາງການທີ່ຂຶ້ນກັບການຄຸ້ມຄອງ ຂອງພະແນກການນັ້ນ.

ຂະແໜງກວດກາລັດ ຂັ້ນພະແນກການຂັ້ນແຂວງ ເຄື່ອນໄຫວວຽກງານພາຍໃຕ້ການຊີ້ນຳດ້ານວິຊາສະເພາະ ຂອງອົງການກວດກາລັດຂັ້ນແຂວງ.

**ມາດຕາ 51 (ປັບປຸງ) ສິດ ແລະ ໜ້າທີ່ ຂອງຂະແໜງກວດກາລັດ ຂັ້ນພະແນກການ ຂັ້ນແຂວງ**

ຂະແໜງກວດກາລັດ ຂັ້ນພະແນກການຂັ້ນແຂວງ ມີ ສິດ ແລະ ໜ້າທີ່ ດັ່ງນີ້:

1. ຈັດຕັ້ງປະຕິບັດ ນະໂຍບາຍ, ກົດໝາຍ, ລະບຽບການ ແລະ ແຜນການ ຂອງອົງການກວດກາລັດຂັ້ນເທິງ ກ່ຽວກັບວຽກງານກວດກາລັດ ຕາມຂະແໜງການ ແລະ ການບໍລິຫານ ໃນຂອບເຂດຄວາມຮັບຜິດຊອບຂອງຕົນ;

2. ໂຄສະນາ, ເຜີຍແຜ່ ນະໂຍບາຍ, ກົດໝາຍ ແລະ ລະບຽບການ ກ່ຽວກັບວຽກງານກວດກາລັດ ໂດຍປະສານສົມທົບກັບພາກສ່ວນທີ່ກ່ຽວຂ້ອງ;

3. ຕິດຕາມ, ກວດກາ ການປະຕິບັດນະໂຍບາຍ, ກົດໝາຍ, ລະບຽບການ, ແຜນການ, ສິດ ແລະ ໜ້າທີ່, ຄວາມຮັບຜິດຊອບຂອງການຈັດຕັ້ງ;

4. ຕິດຕາມ, ກວດກາ ການປະຕິບັດໜ້າທີ່ ຂອງຫົວໜ້າ ແລະ ຮອງຫົວໜ້າຂັ້ນຂະແໜງ ໃນຂັ້ນພະແນກການຂັ້ນແຂວງ ແລະ ພະນັກງານ-ລັດຖະກອນ, ທະຫານ, ຕຳຫຼວດ, ພະນັກງານວິສາຫະກິດຂອງລັດ ແລະ ຜູ້ທີ່ໄດ້ຮັບມອບສິດຈາກທາງການ ພາຍໃນພະແນກການຂອງຕົນ ແລະ ຫ້ອງການຂັ້ນເມືອງຕາມສາຍຕັ້ງ;

5. ສະເໜີໃຫ້ອົງການທີ່ກ່ຽວຂ້ອງ ປະຕິບັດມາດຕະການ ຕໍ່ຜູ້ກະທຳຜິດຕາມກົດໝາຍ;

6. ຄົ້ນຄວ້າ, ພິຈາລະນາ ຄຳສະເໜີຂອງພົນລະເມືອງ ຕາມທີ່ໄດ້ກຳນົດໄວ້ໃນກົດໝາຍວ່າດ້ວຍການແກ້ໄຂຄຳຮ້ອງທຸກ;

7. ສະກັດກັ້ນ ແລະ ຕ້ານການສໍ້ລາດບັງຫຼວງ ຕາມທີ່ໄດ້ກຳນົດໄວ້ໃນກົດໝາຍ;

8. ພົວພັນ ແລະ ປະສານສົມທົບ ກັບບັນດາຂະແໜງການພາຍໃນຂັ້ນພະແນກການຂັ້ນແຂວງ ແລະ ຂັ້ນຫ້ອງການຂັ້ນເມືອງ ຕາມສາຍຕັ້ງ ເພື່ອດຳເນີນການກວດກາ, ການແກ້ໄຂ ແລະ ການປະຕິບັດຜົນຂອງການກວດກາ ຕາມພາລະບົດບາດຂອງຕົນ;

9. ສະເໜີມາດຕະການ, ວິທີການແກ້ໄຂຜົນຂອງການກວດກາລັດ ໃຫ້ຫົວໜ້າຂັ້ນພະແນກຂັ້ນຂອງຕົນ ແລະ ຫົວໜ້າຂັ້ນຫ້ອງການຂັ້ນເມືອງ ຕາມສາຍຕັ້ງ ເພື່ອພິຈາລະນາຕົກລົງ, ແກ້ໄຂ ແລະ ລາຍງານໃຫ້ຂັ້ນເທິງຂອງຕົນ;

10. ສະຫຼຸບ, ລາຍງານ ການເຄື່ອນໄຫວວຽກງານກວດກາລັດ ແລະ ຜົນຂອງການກວດກາ ໃນຂອບເຂດຄວາມຮັບຜິດຊອບຂອງຕົນ ໃຫ້ຫົວໜ້າຂັ້ນພະແນກ, ຫົວໜ້າກົມກວດກາ ຂອງຂະແໜງການຕົນ ແລະ ປະທານອົງການກວດກາລັດຂັ້ນແຂວງ ຢ່າງເປັນປົກກະຕິ;

11. ນຳໃຊ້ສິດ ແລະ ປະຕິບັດໜ້າທີ່ອື່ນ ຕາມທີ່ໄດ້ກຳນົດໄວ້ໃນກົດໝາຍ.

**ມາດຕາ 52 (ປັບປຸງ) ໂຄງປະກອບບຸກຄະລາກອນ ຂອງຂະແໜງກວດກາລັດ ຂັ້ນພະແນກການຂັ້ນແຂວງ**

ໂຄງປະກອບບຸກຄະລາກອນ ຂອງຂະແໜງກວດກາລັດ ຂັ້ນພະແນກການຂັ້ນແຂວງ ມີ ຫົວໜ້າ ແລະ ຮອງຫົວໜ້າຂະແໜງ, ລັດຖະກອນວິຊາການ.

**ມາດຕາ 53 (ປັບປຸງ) ຫົວໜ້າຂະແໜງກວດກາລັດ ຂັ້ນພະແນກການຂັ້ນແຂວງ**

ຫົວໜ້າຂະແໜງກວດກາລັດ ຂັ້ນພະແນກການຂັ້ນແຂວງ ຖືກແຕ່ງຕັ້ງ, ຍົກຍ້າຍ ຫຼື ປົດຕຳແໜ່ງໂດຍ ເຈົ້າແຂວງ, ເຈົ້າຄອງນະຄອນຫຼວງ ຕາມການສະເໜີຂອງຄະນະຈັດຕັ້ງຂັ້ນແຂວງ ບົນພື້ນຖານການເຫັນດີເປັນ ເອກະພາບກັບປະທານອົງການກວດກາລັດຂັ້ນແຂວງ.

ຫົວໜ້າຂະແໜງກວດກາລັດ ຂັ້ນພະແນກການຂັ້ນແຂວງ ມີ ສິດ ແລະ ໜ້າທີ່ ດັ່ງນີ້:

1. ຈັດຕັ້ງປະຕິບັດນະໂຍບາຍ, ກົດໝາຍ ແລະ ລະບຽບການ, ແຜນການ, ແຜນງານ, ໂຄງການ ກ່ຽວກັບວຽກງານກວດກາລັດ ໃນຂອບເຂດຄວາມຮັບຜິດຊອບຂອງຕົນ;
2. ຕິດຕາມ, ກວດກາ ການຈັດຕັ້ງປະຕິບັດວຽກງານກວດກາລັດ ໃນຂະແໜງຂອງຕົນ;
3. ອອກຄຳແນະນຳ ແລະ ແຈ້ງການ ກ່ຽວກັບວຽກງານກວດກາລັດ ທີ່ຕົນຮັບຜິດຊອບ;
4. ດຳເນີນການກວດກາລັດ ຕາມພາລະບົດບາດ, ສິດ ແລະ ໜ້າທີ່ຂອງຕົນ, ໃນກໍລະນີ ທີ່ເກີນ ສິດ ແລະ ໜ້າທີ່ຂອງຕົນ ຕ້ອງສະເໜີຫົວໜ້າຂັ້ນພະແນກການຂັ້ນແຂວງ ເພື່ອພິຈາລະນາຕົກລົງ;
5. ສະເໜີໃຫ້ຫົວໜ້າຂັ້ນພະແນກການຂັ້ນແຂວງ ພິຈາລະນາຕົກລົງແກ້ໄຂຜົນຂອງການກວດກາ ໃນຂອບເຂດການຄຸ້ມຄອງຂອງຕົນ. ໃນກໍລະນີ ທີ່ບໍ່ພິຈາລະນາ ຫຼື ໄດ້ພິຈາລະນາແລ້ວ ແຕ່ເຫັນວ່າຍັງບໍ່ເໝາະ ສົມ ແມ່ນມີສິດລາຍງານຕໍ່ ປະທານອົງການກວດກາລັດຂັ້ນແຂວງ, ກົມກວດກາລັດຂັ້ນກະຊວງ ເພື່ອພິຈາລະ ນາຕົກລົງ;
6. ນຳໃຊ້ສິດ ແລະ ປະຕິບັດໜ້າທີ່ອື່ນ ຕາມທີ່ໄດ້ກຳນົດໄວ້ໃນກົດໝາຍ.

**ມາດຕາ 54 (ປັບປຸງ) ຮອງຫົວໜ້າຂະແໜງກວດກາລັດ ຂັ້ນພະແນກການຂັ້ນແຂວງ**

ຮອງຫົວໜ້າຂະແໜງກວດກາລັດ ຂັ້ນພະແນກການຂັ້ນແຂວງ ຖືກແຕ່ງຕັ້ງ, ຍົກຍ້າຍ ຫຼື ປົດຕຳແໜ່ງ ໂດຍເຈົ້າແຂວງ, ເຈົ້າຄອງນະຄອນຫຼວງ ຕາມການສະເໜີຂອງຄະນະຈັດຕັ້ງຂັ້ນແຂວງ ບົນພື້ນຖານເຫັນດີເປັນ ເອກະພາບກັບຫົວໜ້າພະແນກຂັ້ນແຂວງ.

ຮອງຫົວໜ້າຂະແໜງກວດກາລັດ ຂັ້ນພະແນກການຂັ້ນແຂວງ ມີສິດ ແລະ ໜ້າທີ່ ຊ່ວຍວຽກຫົວ ໜ້າຂະແໜງກວດກາລັດ ຂັ້ນພະແນກການຂັ້ນແຂວງ ແລະ ຮັບຜິດຊອບວຽກງານໃດໜຶ່ງ ຕາມການມອບໝາຍ ຂອງຫົວໜ້າ. ໃນກໍລະນີ ທີ່ຫົວໜ້າບໍ່ຢູ່ ຫຼື ບໍ່ສາມາດປະຕິບັດໜ້າທີ່ໄດ້ນັ້ນ ແມ່ນຮອງຫົວໜ້າຜູ້ທີ່ໄດ້ຮັບມອບ ໝາຍ ຈາກຫົວໜ້າເປັນຜູ້ຮັກສາການແທນ.

## ໝວດທີ 4
## ຄະນະກວດກາ ແລະ ຄະນະກວດກາສະເພາະກິດ

**ມາດຕາ 55 (ປັບປຸງ) ການແຕ່ງຕັ້ງຄະນະກວດກາ**

ເພື່ອດຳເນີນການກວດກາແຕ່ລະຄັ້ງ ຫົວໜ້າອົງການກວດກາລັດ ຕາມຂັ້ນບໍລິຫານການປົກຄອງ ແລະ ຕາມຂະແໜງການແຕ່ງຕັ້ງຄະນະກວດກາ ຂັ້ນຂອງຕົນ.

ຄະນະກວດກາ ປະກອບດ້ວຍ ຫົວໜ້າ, ຮອງຫົວໜ້າ ແລະ ລັດຖະກອນວິຊາການ ຈຳນວນໜຶ່ງເປັນກຳມະການ.

ການເຄື່ອນໄຫວປະຕິບັດສິດ ແລະ ໜ້າທີ່ ຂອງຄະນະກວດກາ ສິ້ນສຸດລົງ ພາຍຫຼັງການກວດກາສຳເລັດ.

**ມາດຕາ 56 (ປັບປຸງ) ສິດ ແລະ ໜ້າທີ່ ຂອງຄະນະກວດກາ**

ຄະນະກວດກາ ມີສິດ ແລະ ໜ້າທີ່ ໃນການກະກຽມ, ການດຳເນີນການກວດກາ, ການສະຫຼຸບ ແລະ ລາຍງານຜົນຂອງການກວດກາ; ສະເໜີໃຫ້ພິຈາລະນາ ແລະ ແກ້ໄຂຜົນຂອງການກວດກາ ຕາມທີ່ໄດ້ກຳນົດໄວ້ ໃນມາດ 23 ແລະ 24 ຂອງກົດໝາຍສະບັບນີ້.

**ມາດຕາ 57 ສິດ ແລະ ໜ້າທີ່ ຂອງຫົວໜ້າຄະນະກວດກາ**

ຫົວໜ້າຄະນະກວດກາ ມີ ສິດ ແລະ ໜ້າທີ່ ດັ່ງນີ້:

1. ຈັດຕັ້ງ, ຊີ້ນຳກຳມະການໃນຄະນະກວດກາ ປະຕິບັດໃຫ້ຖືກຕ້ອງຕາມຈຸດປະສົງ, ລະດັບຄາດໝາຍ, ເນື້ອໃນ ແລະ ກຳນົດເວລາຂອງການກວດກາ;
2. ສະເໜີຄຳເຫັນຕໍ່ຜູ້ຕົກລົງກວດການຳໃຊ້ມາດຕະການ ເພື່ອຮັບປະກັນການປະຕິບັດໜ້າທີ່ ຂອງຄະນະກວດກາ;
3. ສະເໜີໃຫ້ເປົ້າໝາຍຖືກກວດກາ ສະໜອງຂໍ້ມູນ, ເອກະສານ, ລາຍງານເປັນລາຍລັກອັກສອນ, ອະທິບາຍ ກ່ຽວກັບບັນຫາທີ່ພົວພັນກັບເນື້ອໃນກວດກາ. ໃນກໍລະນີ ທີ່ຈຳເປັນອາດດຳເນີນການກວດກາ ແລະ ຂຶ້ນບັນຊີຊັບສິນຂອງເປົ້າໝາຍຖືກກວດກາ;
4. ສະເໜີໃຫ້ບຸກຄົນ, ນິຕິບຸກຄົນ ຫຼື ການຈັດຕັ້ງອື່ນ ສະໜອງຂໍ້ມູນ, ເອກະສານ ທີ່ພົວພັນກັບເນື້ອໃນກວດກາ;
5. ຕົກລົງຍຶດ ຫຼື ອາຍັດ ເອກະສານ ຂອງເປົ້າໝາຍຖືກກວດກາ ເມື່ອມີຫຼັກຖານຢັ້ງຢືນວ່າ ມີການກະທຳຜິດ ຫຼື ລະເມີດກົດໝາຍ ເພື່ອປ້ອງກັນບໍ່ໃຫ້ມີການປອມແປງ ຫຼື ທຳລາຍເອກະສານ, ຫຼັກຖານ;
6. ສະເໜີໃຫ້ຂັ້ນເທິງ ຂອງເປົ້າໝາຍຖືກກວດກາໂຈະການປະຕິບັດໜ້າທີ່ຊົ່ວຄາວ ເມື່ອເຫັນວ່າຜູ້ຖືກກວດກາຈະກໍ່ຄວາມເສຍຫາຍຢ່າງຫຼວງຫຼາຍ ແກ່ຜົນປະໂຫຍດຂອງລັດ, ສິດ ແລະ ຜົນປະໂຫຍດອັນຊອບທຳຂອງພົນລະເມືອງ;
7. ສະເໜີໃຫ້ຂັ້ນເທິງ ຂອງເປົ້າໝາຍຖືກກວດກາໂຈະຊົ່ວຄາວ ກ່ຽວກັບການຍົກຍ້າຍໜ້າທີ່, ຮັບບຳນານ ແລະ ອື່ນໆ ຕໍ່ຜູ້ຖືກກວດກາ ຫຼື ຜູ້ຮ່ວມງານ ທີ່ເຫັນວ່າຈະເປັນການກີດຂວາງວຽກງານກວດກາ;
8. ລາຍງານຕໍ່ຜູ້ຕົກລົງໃຫ້ກວດກາ ກ່ຽວກັບຜົນຂອງການກວດກາ ແລະ ຕ້ອງຮັບຜິດຊອບ ກ່ຽວກັບບົດລາຍງານດັ່ງກ່າວ;
9. ນຳໃຊ້ສິດ ແລະ ປະຕິບັດໜ້າທີ່ອື່ນ ຕາມທີ່ໄດ້ກຳນົດໄວ້ໃນກົດໝາຍ.

**ມາດຕາ 58 (ປັບປຸງ) ສິດ ແລະ ໜ້າທີ່ ຂອງຮອງຫົວໜ້າ ແລະ ກຳມະການ**

ຮອງຫົວໜ້າ ແລະ ກຳມະການ ມີ ສິດ ແລະ ໜ້າທີ່ ດັ່ງນີ້:

1. ປະຕິບັດວຽກງານຕາມການມອບໝາຍ ແລະ ການແບ່ງງານ ຂອງຫົວໜ້າຄະນະ;
2. ສະຫຼຸບ ລາຍງານ ກ່ຽວກັບການເຄື່ອນໄຫວກວດກາ ໃຫ້ຫົວໜ້າຄະນະ;
3. ປະກອບຄຳເຫັນຕໍ່ບົດສະຫຼຸບ, ບົດລາຍງານຜົນຂອງການກວດກາ;

4. ຮັບຜິດຊອບຕໍ່ໜ້າກົດໝາຍ ແລະ ຕໍ່ຫົວໜ້າຄະນະ ກ່ຽວກັບການປະຕິບັດໜ້າທີ່ຂອງຕົນ ໃນການກວດກາ;

5. ນຳໃຊ້ສິດ ແລະ ປະຕິບັດໜ້າທີ່ອື່ນ ຕາມທີ່ໄດ້ກຳນົດໄວ້ໃນກົດໝາຍ.

**ມາດຕາ 59 (ປັບປຸງ) ການແຕ່ງຕັ້ງຄະນະກວດກາສະເພາະກິດ**

ເພື່ອດຳເນີນການກວດກາບັນຫາໃດໜຶ່ງ ທີ່ເຫັນວ່າມີຄວາມຫຍຸ້ງຍາກສັບສົນ ແລະ ພົວພັນເຖິງຫຼາຍພາກສ່ວນນັ້ນ ນາຍົກລັດຖະມົນຕີ, ປະທານອົງການກວດກາລັດຖະບານ, ລັດຖະມົນຕີ, ຫົວໜ້າອົງການ, ຫົວໜ້າອົງການລັດທຽບເທົ່າກະຊວງ, ເຈົ້າແຂວງ, ເຈົ້າຄອງນະຄອນຫຼວງ, ເຈົ້າເມືອງ, ຫົວໜ້າເທດສະບານ, ເຈົ້ານະຄອນ ແຕ່ງຕັ້ງຄະນະກວດກາສະເພາະກິດຂຶ້ນ ຕາມຂອບເຂດຄວາມຮັບຜິດຊອບຂອງຕົນ.

ຄະນະກວດກາສະເພາະກິດ ປະກອບດ້ວຍ ຫົວໜ້າ, ຮອງຫົວໜ້າ ແລະ ລັດຖະກອນວິຊາການ ຈຳນວນໜຶ່ງ ເປັນກຳມະການ.

ການເຄື່ອນໄຫວປະຕິບັດສິດ ແລະ ໜ້າທີ່ ຂອງຄະນະກວດກາສະເພາະກິດ ສິ້ນສຸດລົງ ພາຍຫຼັງການກວດກາສຳເລັດ.

**ມາດຕາ 60 ສິດ ແລະ ໜ້າທີ່ ຂອງຄະນະກວດກາສະເພາະກິດ**

ຄະນະກວດກາສະເພາະກິດ, ຫົວໜ້າ, ຮອງຫົວໜ້າ ແລະ ກຳມະການ ມີສິດ ແລະ ໜ້າທີ່ ຕາມທີ່ໄດ້ກຳນົດໄວ້ໃນມາດຕາ 56, 57 ແລະ 58 ຂອງກົດໝາຍສະບັບນີ້.

**ມາດຕາ 61 (ປັບປຸງ) ມາດຕະຖານ ຂອງລັດຖະກອນກວດກາລັດ**

ລັດຖະກອນກວດກາລັດ ຕ້ອງມີມາດຕະຖານ ດັ່ງນີ້:

1. ມີຄວາມຈົງຮັກພັກດີ ຕໍ່ປະເທດຊາດ, ມີທັດສະນະຫຼັກໝັ້ນການເມືອງໜັກແໜ້ນ, ມີຄຸນສົມບັດສິນທຳປະຕິວັດ;

2. ກຳແໜ້ນແນວທາງນະໂຍບາຍ, ກົດໝາຍ ແລະ ລະບຽບການ;

3. ມີຄວາມຮັບຜິດຊອບສູງ, ກ້າຫານ, ເດັດຂາດ, ມີໄຫວພິບ ໃນການປະຕິບັດໜ້າທີ່ວຽກງານ, ມີຄວາມໂປ່ງໃສ, ມີຄວາມຍຸຕິທຳ, ຕັດສິນບັນຫາຢ່າງພາວະວິໄສ, ຖືກຕ້ອງກັບຄວາມເປັນຈິງ ແລະ ເປັນແບບຢ່າງໃນການປະຕິບັດກົດໝາຍ ແລະ ລະບຽບການ;

4. ມີຄວາມຮູ້, ຄວາມສາມາດ ກ່ຽວກັບວິຊາສະເພາະໃດໜຶ່ງ ໂດຍມີປະກາສະນີຍະບັດ ແຕ່ຊັ້ນສູງຂຶ້ນໄປ;

5. ໄດ້ຜ່ານການຮໍ່າຮຽນ ຫຼື ການຝຶກອົບຮົມວຽກງານກວດກາ;

6. ມີຄວາມຮູ້ດ້ານພາສາຕ່າງປະເທດໃດໜຶ່ງ ແລະ ຄອມພິວເຕີ ໃນລະດັບພື້ນຖານຂຶ້ນໄປ;

7. ຮັກສາຄວາມລັບໃນການປະຕິບັດໜ້າທີ່ວິຊາສະເພາະ;

8. ບໍ່ເຄີຍຖືກລົງວິໄນ ຫຼື ບໍ່ເຄີຍຖືກສານປະຊາຊົນຕັດສິນລົງໂທດ ຍ້ອນການກະທຳຜິດໂດຍເຈດຕະນາ;

9. ຖືສັນຊາດລາວໂດຍກຳເນີດ;

10. ມີສຸຂະພາບດີ.

# ພາກທີ V
# ພັນທະ ແລະ ສິດ ຂອງບຸກຄົນ, ນິຕິບຸກຄົນ ຫຼື ການຈັດຕັ້ງ ທີ່ຖືກກວດກາ

**ມາດຕາ 62 (ປັບປຸງ) ພັນທະ ຂອງບຸກຄົນ, ນິຕິບຸກຄົນ ຫຼື ການຈັດຕັ້ງ ທີ່ຖືກກວດກາ**

ບຸກຄົນ, ນິຕິບຸກຄົນ ຫຼື ການຈັດຕັ້ງ ທີ່ຖືກກວດກາ ມີ ພັນທະ ດັ່ງນີ້:

1. ປະຕິບັດຂໍ້ຕົກລົງ ກ່ຽວກັບການກວດກາ, ໃຫ້ຄວາມຮ່ວມມື, ສະໜອງຂໍ້ມູນ, ເອກະສານ ຢ່າງຄົບຖ້ວນ, ຊັດເຈນ ແລະ ທັນເວລາ ຕາມການສະເໜີ ຂອງຄະນະກວດກາ ແລະ ຕ້ອງມີຄວາມຮັບຜິດຊອບຕໍ່ໜ້າກົດໝາຍ ກ່ຽວກັບຂໍ້ມູນ, ເອກະສານ ທີ່ໄດ້ສະໜອງໃຫ້;
2. ປະຕິບັດຕາມການສະເໜີ, ການຕົກລົງກ່ຽວກັບການແກ້ໄຂຜົນຂອງການກວດກາຂອງຄະນະກວດກາ ແລະ ອົງການທີ່ກ່ຽວຂ້ອງ;
3. ລາຍງານເປັນລາຍລັກອັກສອນ ກ່ຽວກັບການຈັດຕັ້ງປະຕິບັດການແກ້ໄຂຜົນ ຂອງການກວດກາ ໃຫ້ຄະນະກວດກາຊາບ;
4. ປະຕິບັດພັນທະອື່ນ ຕາມທີ່ໄດ້ກຳນົດໄວ້ໃນກົດໝາຍ.

**ມາດຕາ 63 (ປັບປຸງ) ສິດ ຂອງບຸກຄົນ, ນິຕິບຸກຄົນ ຫຼື ການຈັດຕັ້ງທີ່ຖືກກວດກາ**

ບຸກຄົນ, ນິຕິບຸກຄົນ ຫຼື ການຈັດຕັ້ງ ທີ່ຖືກກວດກາ ມີສິດ ດັ່ງນີ້:

1. ສະເໜີ ໃຫ້ແຈ້ງຂໍ້ຕົກລົງ ກ່ຽວກັບການກວດກາ ໃຫ້ຕົນຊາບ;
2. ສະເໜີປ່ຽນບຸກຄົນ ໃນຄະນະກວດກາ ທີ່ເຄີຍມີຂໍ້ຂັດແຍ່ງກັບຕົນ;
3. ອະທິບາຍ, ຊີ້ແຈງ ບັນຫາຕ່າງໆ ທີ່ພົວພັນເຖິງເນື້ອໃນຂອງການກວດກາ;
4. ປະຕິເສດການສະໜອງຂໍ້ມູນ, ເອກະສານ ທີ່ບໍ່ພົວພັນເຖິງເນື້ອໃນຂອງການກວດກາ;
5. ສະເໜີຕໍ່ຜູ້ຕົກລົງໃຫ້ກວດກາ ກ່ຽວກັບການກະທຳຂອງຄະນະກວດກາ ແລະ ຜູ້ອື່ນ ທີ່ເຂົ້າຮ່ວມການກວດກາ ຊຶ່ງຕົນເຫັນວ່າ ບໍ່ຖືກຕ້ອງຕາມກົດໝາຍ;
6. ສະເໜີຄຳເຫັນ ກ່ຽວກັບບົດສະຫຼຸບລາຍງານຜົນຂອງການກວດກາ;
7. ສະເໜີ ຫຼື ຮ້ອງຟ້ອງ ໃຫ້ມີການທົດແທນຄ່າເສຍຫາຍ ຖ້າຫາກເຫັນວ່າຕົນໄດ້ຮັບຄວາມເສຍຫາຍຈາກການກວດກາ ທີ່ບໍ່ຖືກຕ້ອງ;
8. ນຳໃຊ້ສິດ ແລະ ປະຕິບັດໜ້າທີ່ອື່ນ ຕາມທີ່ໄດ້ກຳນົດໄວ້ໃນກົດໝາຍ.

# ພາກທີ VI
# ຂໍ້ຫ້າມ

**ມາດຕາ 64 (ປັບປຸງ) ຂໍ້ຫ້າມ ສຳລັບຜູ້ກວດກາ**

ຫ້າມ ຜູ້ກວດກາ ມີພຶດຕິກຳ ດັ່ງນີ້:

1. ສວຍໃຊ້ຕຳແໜ່ງ, ໜ້າທີ່, ສິດອຳນາດທຸກຮູບແບບ ເພື່ອຫາຜົນປະໂຫຍດສ່ວນຕົວ, ຄອບຄົວ ຫຼື ຍາດພີ່ນ້ອງ;
2. ຂໍເອົາ, ທວງເອົາ ຫຼື ຮັບ ສິນບົນ;

3. ປະຕິບັດສິດ, ໜ້າທີ່ ກວດກາເກີນຂອບເຂດ ຂອງຂໍ້ຕົກລົງ ຫຼື ລະເມີດກົດໝາຍ ແລະ ລະບຽບການກ່ຽວກັບການກວດກາ;

4. ບັງຄັບ ແລະ ນາບຂູ່ ເປົ້າໝາຍຖືກກວດກາ;

5. ເມີນເສີຍຕໍ່ໜ້າທີ່, ບິດເບືອນຄວາມຈິງ, ປິດບັງ, ຊຸກເຊື່ອງ ຫຼື ປົກປ້ອງເປົ້າໝາຍຖືກກວດກາ ແລະ ລາຍງານຂໍ້ມູນກວດກາບໍ່ກົງກັບຄວາມເປັນຈິງ;

6. ເປີດເຜີຍຂໍ້ມູນ ກ່ຽວກັບການກວດກາ ໂດຍບໍ່ໄດ້ຮັບອະນຸຍາດ;

7. ໃຫ້ຄຳສັນຍາ ຫຼື ພົວພັນກັບຜູ້ຖືກກວດກາ ຫຼື ບຸກຄົນອື່ນທີ່ກ່ຽວຂ້ອງ ເພື່ອຫາຜົນປະໂຫຍດ;

8. ມີພຶດຕິກຳອື່ນ ທີ່ເປັນການລະເມີດກົດໝາຍ.

**ມາດຕາ 65 (ປັບປຸງ) ຂໍ້ຫ້າມ ສຳລັບເປົ້າໝາຍຖືກກວດກາ**

ຫ້າມ ເປົ້າໝາຍຖືກກວດກາ ມີພຶດຕິກຳ ດັ່ງນີ້:

1. ປະຕິເສດການສະໜອງຂໍ້ມູນ, ຫຼັກຖານ, ເອກະສານ ກ່ຽວກັບການກວດກາ;

2. ລາຍງານ, ສະໜອງຂໍ້ມູນ, ຫຼັກຖານ, ເອກະສານ ບໍ່ຖືກກັບຄວາມເປັນຈິງ; ຊຸກເຊື່ອງ, ທຳລາຍເອກະສານ, ວັດຖຸສິ່ງຂອງ ຊຶ່ງເປັນຫຼັກຖານທີ່ພົວພັນເຖິງການກວດກາ;

3. ຂັດຂວາງ, ສ້າງຄວາມຫຍຸ້ງຍາກ, ນາບຂູ່ຄະນະກວດກາ ແລະ ຜູ້ເຂົ້າຮ່ວມກວດກາ ຫຼື ຜູ້ລາຍງານ, ຜູ້ສະໜອງຂໍ້ມູນ ໃຫ້ແກ່ການກວດກາ ຫຼື ບຸກຄົນອື່ນທີ່ກ່ຽວຂ້ອງ;

4. ຊື້ຈ້າງ, ໃຫ້ສິນບົນຄະນະກວດກາ ແລະ ຜູ້ເຂົ້າຮ່ວມ, ຜູ້ສະໜອງຂໍ້ມູນ ຫຼື ບຸກຄົນອື່ນ ທີ່ກ່ຽວຂ້ອງກັບການກວດກາ;

5. ແກ່ຍາວ ເວລາດຳເນີນການກວດກາ;

6. ມີພຶດຕິກຳອື່ນ ທີ່ເປັນການລະເມີດກົດໝາຍ.

**ມາດຕາ 66 ຂໍ້ຫ້າມສຳລັບ ບຸກຄົນ, ນິຕິບຸກຄົນ ຫຼື ການຈັດຕັ້ງອື່ນ**

ຫ້າມ ບຸກຄົນ, ນິຕິບຸກຄົນ ຫຼື ການຈັດຕັ້ງອື່ນ ມີພຶດຕິກຳ ດັ່ງນີ້:

1. ຍຸຍົງ ໃຫ້ມີການກວດກາ ຫຼື ໃຫ້ມີການຕ້ານການກວດກາ;

2. ແຊກແຊງ, ກ້າວກ່າຍ ແລະ ຂັດຂວາງ ການກວດກາ;

3. ປົກປິດ, ເຊື່ອງອຳ ຫຼື ທຳລາຍຂໍ້ມູນ, ຫຼັກຖານ ກ່ຽວກັບການກວດກາ;

4. ໃຊ້ຄວາມຮຸນແຮງ, ນາບຂູ່ ຫຼື ທຳຮ້າຍຜູ້ກວດກາ, ຜູ້ລາຍງານ, ຜູ້ໃຫ້ຂໍ້ມູນ ຫຼື ບຸກຄົນອື່ນ ທີ່ກ່ຽວຂ້ອງ;

5. ປົກປ້ອງ, ຊຸກເຊື່ອງ ບຸກຄົນທີ່ຖືກກວດກາ;

6. ມີພຶດຕິກຳອື່ນ ທີ່ເປັນການລະເມີດກົດໝາຍ.

## ພາກທີ VII
## ການຕິດຕາມ, ກວດກາ ການເຄື່ອນໄຫວວຽກງານກວດກາລັດ

**ມາດຕາ 67 (ປັບປຸງ) ປະເພດການຕິດຕາມ, ກວດກາ ການເຄື່ອນໄຫວວຽກງານກວດກາລັດ**

ການຕິດຕາມ, ກວດກາ ການເຄື່ອນໄຫວວຽກງານກວດກາລັດ ມີ ດັ່ງນີ້:

1. ການຕິດຕາມ, ກວດກາ ພາຍໃນ ແມ່ນ ການຕິດຕາມ, ກວດກາ ການເຄື່ອນໄຫວວຽກງານກວດກາລັດ ໃນລະບົບການຈັດຕັ້ງຂອງອົງການກວດກາລັດ ແຕ່ລະຂັ້ນ ເພື່ອຮັບປະກັນໃຫ້ວຽກງານກວດກາ ດຳເນີນໄປດ້ວຍດີ, ມີປະສິດທິພາບ, ໂປ່ງໃສ ແລະ ຍຸຕິທຳ. ອົງການກວດກາລັດແຕ່ລະຂັ້ນ ຕ້ອງມີການກວດກາພາຍໃນ ຢ່າງເປັນປົກກະຕິ.

2. ການຕິດຕາມ, ກວດກາ ພາຍນອກ ແມ່ນ ການຕິດຕາມ, ກວດກາ ຂອງສະພາແຫ່ງຊາດ, ສະພາປະຊາຊົນຂັ້ນແຂວງ, ແນວລາວສ້າງຊາດ, ອົງການຈັດຕັ້ງມະຫາຊົນ, ອົງການຈັດຕັ້ງສັງຄົມ, ສື່ມວນຊົນ ແລະ ພົນລະເມືອງ ຕໍ່ການເຄື່ອນໄຫວວຽກງານ ຂອງອົງການກວດກາລັດແຕ່ລະຂັ້ນ.

**ມາດຕາ 68 (ໃໝ່) ເນື້ອໃນການຕິດຕາມ, ກວດກາ ການເຄື່ອນໄຫວວຽກງານກວດກາລັດ**

ການຕິດຕາມ, ກວດກາ ການເຄື່ອນໄຫວວຽກງານກວດກາລັດ ຂອງອົງການກວດກາລັດ ມີເນື້ອໃນ ດັ່ງນີ້:

1. ການຈັດຕັ້ງປະຕິບັດກົດໝາຍ ແລະ ລະບຽບການ ກ່ຽວກັບວຽກງານກວດກາລັດ;

2. ການນຳໃຊ້ສິດ ແລະ ປະຕິບັດໜ້າທີ່ ຂອງອົງການຈັດຕັ້ງປະຕິບັດວຽກງານກວດກາ ລວມທັງການນຳໃຊ້ມາດຕະການ ທາງດ້ານກົດໝາຍຕໍ່ຜູ້ລະເມີດ.

## ພາກທີ VIII
## ວັນສ້າງຕັ້ງ, ງົບປະມານ, ເຄື່ອງແບບ, ກາໝາຍ, ບັດກວດກາ ແລະ ຕາປະທັບ

**ມາດຕາ 69 (ໃໝ່) ວັນສ້າງຕັ້ງອົງການກວດກາລັດ**

ວັນສ້າງຕັ້ງອົງການກວດກາລັດ ແມ່ນ ວັນທີ 16 ກຸມພາ 1982.

**ມາດຕາ 70 (ປັບປຸງ) ງົບປະມານ**

ງົບປະມານ ຂອງອົງການກວດກາລັດຖະບານ ແມ່ນ ຫົວໜ່ວຍງົບປະມານຂັ້ນໜຶ່ງ ຂອງງົບປະມານແຫ່ງລັດ ເພື່ອນຳໃຊ້ເຂົ້າໃນການເຄື່ອນໄຫວວຽກງານກວດກາ.

ງົບປະມານ ຂອງອົງການກວດກາລັດຂັ້ນໃດ ແມ່ນຂຶ້ນກັບງົບປະມານ ຂອງອົງການບໍລິຫານຂັ້ນນັ້ນ. ໃນນັ້ນ, ນອກຈາກມີງົບປະມານປົກກະຕິແລ້ວ ໃຫ້ມີງົບປະມານສະເພາະສຳລັບການກວດກາຕາມຄຳສັ່ງ, ກວດກາຕາມຜົນການກວດສອບ.

**ມາດຕາ 71 (ປັບປຸງ) ເຄື່ອງແບບ, ກາໝາຍ ແລະ ບັດກວດກາ**

ອົງການກວດກາລັດ ນັບແຕ່ຂັ້ນເມືອງຂຶ້ນໄປ ມີເຄື່ອງແບບ ແລະ ກາໝາຍ ໂດຍແມ່ນລັດຖະບານເປັນຜູ້ກຳນົດ.

ຜູ້ກວດກາ ຂອງອົງການກວດກາລັດ ມີບັດກວດກາສະເພາະ ທີ່ອອກໃຫ້ໂດຍອົງການກວດກາລັດຖະບານ.

**ມາດຕາ 72 ຕາປະທັບ**

ໃນການເຄື່ອນໄຫວວຽກງານຂອງຕົນ ອົງການກວດກາລັດ ຕາມຂັ້ນບໍລິຫານການປົກຄອງ ແລະ ຕາມຂະແໜງການ ມີຕາປະທັບສະເພາະຂອງຕົນ.

## ພາກທີ IX
## ນະໂຍບາຍ ຕໍ່ຜູ້ມີຜົນງານ ແລະ ມາດຕະການຕໍ່ຜູ້ລະເມີດ

**ມາດຕາ 73 (ປັບປຸງ) ນະໂຍບາຍຕໍ່ຜູ້ມີຜົນງານ**

ບຸກຄົນ, ນິຕິບຸກຄົນ ຫຼື ການຈັດຕັ້ງ ທີ່ມີຜົນງານດີເດັ່ນ ໃນການປະຕິບັດກົດໝາຍສະບັບນີ້ ເປັນຕົ້ນ ໄດ້ປະກອບສ່ວນ, ຮ່ວມມືໃນການຕິດຕາມ, ກວດກາ, ລາຍງານ, ສະໜອງແຫຼ່ງຂ່າວ, ຂໍ້ມູນ, ຫຼັກຖານຖືກກັບຕົວຈິງ, ທັນເວລາ ໃຫ້ແກ່ການດຳເນີນການກວດກາ ແລະ ແກ້ໄຂຜົນຂອງການກວດກາ ຈະໄດ້ຮັບການປົກປ້ອງ, ການຍ້ອງຍໍ ແລະ ນະໂຍບາຍອື່ນຕາມລະບຽບການ.

**ມາດຕາ 74 ມາດຕະການຕໍ່ຜູ້ລະເມີດ**

ບຸກຄົນ, ນິຕິບຸກຄົນ ຫຼື ການຈັດຕັ້ງ ທີ່ລະເມີດກົດໝາຍສະບັບນີ້ ຊຶ່ງກໍ່ຄວາມເສຍຫາຍໃຫ້ແກ່ຜົນປະໂຫຍດຂອງລັດ, ສັງຄົມ ຫຼື ສິດ ແລະ ຜົນປະໂຫຍດອັນຊອບທຳຂອງພົນລະເມືອງ ຈະຖືກປະຕິບັດມາດຕະການສຶກສາອົບຮົມ, ລົງວິໄນ ຫຼື ຖືກລົງໂທດ ຕາມກໍລະນີ ເບົາ ຫຼື ໜັກ ພ້ອມທັງໃຊ້ແທນຄ່າເສຍຫາຍທີ່ຕົນໄດ້ກໍ່ຂຶ້ນຢ່າງຄົບຖ້ວນ.

**ມາດຕາ 75 ມາດຕະການສຶກສາອົບຮົມ**

ບຸກຄົນໃດ ມີພຶດຕິກຳ ທີ່ກໍ່ຄວາມເສຍຫາຍໜ້ອຍ, ມີຄວາມຈິງໃຈລາຍງານ, ຮັບສາລະພາບ ຕໍ່ຄວາມຜິດຂອງຕົນຕໍ່ການຈັດຕັ້ງ ແລະ ສົ່ງຊັບສິນທີ່ໄດ້ເອົາໄປ ໂດຍບໍ່ຖືກຕ້ອງນັ້ນຄືນ ໃຫ້ແກ່ການຈັດຕັ້ງຢ່າງຄົບຖ້ວນແລ້ວ ກໍຈະໄດ້ຮັບການສຶກສາອົບຮົມ.

**ມາດຕາ 76 (ປັບປຸງ) ມາດຕະການທາງວິໄນ**

ບຸກຄົນໃດ ທີ່ໄດ້ກະທຳຜິດໃນສະຖານເບົາ ແຕ່ບໍ່ມີຄວາມຈິງໃຈລາຍງານ, ຫຼົບຫຼີກຈາກຄວາມຜິດກໍຈະຖືກລົງວິໄນ ຕາມແຕ່ກໍລະນີ ຕາມທີ່ໄດ້ກຳນົດໄວ້ໃນກົດໝາຍວ່າດ້ວຍພະນັກງານ-ລັດຖະກອນ.

**ມາດຕາ 77 ມາດຕະການທາງແພ່ງ**

ບຸກຄົນໃດ ທີ່ໄດ້ລະເມີດກົດໝາຍ ແລະ ລະບຽບການ ຊຶ່ງກໍ່ຄວາມເສຍຫາຍ ຕໍ່ຊັບສິນຂອງບຸກຄົນ, ນິຕິບຸກຄົນ ຫຼື ການຈັດຕັ້ງ ກໍຈະໄດ້ໃຊ້ແທນຄ່າເສຍຫາຍ ທີ່ຕົນໄດ້ກໍ່ຂຶ້ນນັ້ນ ຢ່າງຄົບຖ້ວນ.

**ມາດຕາ 78 (ປັບປຸງ) ມາດຕະການທາງອາຍາ**

ບຸກຄົນໃດ ທີ່ໄດ້ລະເມີດກົດໝາຍ ຊຶ່ງເປັນການກະທຳຜິດທາງອາຍາ ເປັນຕົ້ນ ການໃຫ້ ແລະ ຮັບສິນບົນ, ການສວຍໃຊ້ສິດອຳນາດໜ້າທີ່ເກີນຂອບເຂດ, ການປອມແປງເອກະສານ, ການຫຼົກໂລບ, ປອມແປງກຳນົດໝາຍເຕັກນິກ, ມາດຕະຖານເຕັກນິກ, ອອກແບບ, ຄິດໄລ່ລາຄາຫຼືໜ່ວຍການກໍ່ສ້າງ ແລະ ພຶດຕິກຳອື່ນ ທີ່ເປັນການກະທຳຜິດທາງອາຍາ ຈະຖືກລົງໂທດຕາມກົດໝາຍ.

## ພາກທີ X
## ບົດບັນຍັດສຸດທ້າຍ

**ມາດຕາ 79 ການຈັດຕັ້ງປະຕິບັດ**

ລັດຖະບານ ແຫ່ງ ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ ເປັນຜູ້ຈັດຕັ້ງປະຕິບັດກົດໝາຍສະບັບນີ້.

**ມາດຕາ 80 (ປັບປຸງ) ຜົນສັກສິດ**

ກົດໝາຍສະບັບນີ້ ມີຜົນສັກສິດ ນັບແຕ່ວັນ ປະທານປະເທດ ແຫ່ງ ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ ໄດ້ອອກລັດຖະດຳລັດປະກາດໃຊ້ ແລະ ພາຍຫຼັງໄດ້ລົງໃນຈົດໝາຍເຫດທາງລັດຖະການສິບຫ້າ ວັນ.

ກົດໝາຍສະບັບນີ້ ປ່ຽນແທນກົດໝາຍວ່າດ້ວຍການກວດກາລັດ ສະບັບເລກທີ 02/ສພຊ, ລົງວັນທີ 2 ກໍລະກົດ 2007.

ຂໍ້ກຳນົດ, ບົດບັນຍັດໃດ ທີ່ຂັດກັບກົດໝາຍສະບັບນີ້ ລ້ວນແຕ່ຖືກຍົກເລີກ.

ປະທານສະພາແຫ່ງຊາດ

ປານີ ຢາທໍ່ຕູ້